<u>ມະຫາວິທະຍາໄລແຫ່ງຊາດ</u>

<u>ຄະນະກະເສດສາດ</u>

<u>ວິທະຍາເຂດນາບົງ</u>

<u>ພາກວິຊາ ເສດຖະກິດຊົນນະບົດ</u>

<u>ແລະ ເຕັກໂນໂລຊີອາຫານ</u>

# ບົດໂຄງການຈົບຊັ້ນທ້າຍການສຶກສາ

<u>ເລື່ອງ</u>:

# ສຶກສາເງື່ອນໄຂການຮັບປະກັນຄວາມຍືນຍົງທາງດ້ານຜະລິດຕະພາບ ຂອງການຜະລິດພາຍໃຕ້ສັນຍາຢູ່ ເມືອງບຸນເໜືອ ແຂວງຜົ້ງສາລີ

# Study on Ensuring Sustainability of Productivity Under Contract Farming in Bounneau District, Phongsaly Province

**<u>ສະເໜີໂດຍ</u>**: ນ. ລິນສຸກ ບຸນວິໄຊ

ລາຍເຊັນ : ..................................................

**<u>ຊີ້ນຳໂດຍ</u>**: ອຈ. ລີຕິວ ເຈ່ຍຫຼີ

ລາຍເຊັນ : ..................................................

**<u>ພາກວິຊາ</u>** :............................................................

2012

# ບົດຄັດຫຍໍ້

ຈາກການສຶກສາກ່ຽວກັບ ເງື່ອນໄຂການຮັບປະກັນຄວາມຍືນຍົງທາງດ້ານຜະລິດຕະພາບຂອງການຜະລິດພາຍໃຕ້ສັນຍາ ໂດຍມີຈຸດປະສົງເພື່ອສຶກສາສະພາບບັນຫາຂອງການຜະລິດພາຍໃຕ້ສັນຍາທີ່ເຮັດໃຫ້ຜະລິດຕະພາບຕົກຕໍ່າ ແລະ ແນວທາງໃນການຮັກສາຜະລິດຕະພາບຂອງການຜະລິດກະສິກຳພາຍໃຕ້ສັນຍາຢູ່ເມືອງບຸນເໜືອ ແຂວງຜົ້ງສາລີ ເປັນໄລຍະເວລາ 5 ເດືອນ ຊຶ່ງເລີ່ມຕັ້ງແຕ່ວັນທີ 8 ກຸມພາ 2012 ຫາ 8 ມິຖຸນາ 2012. ໃນການສຶກສາໄດ້ແບ່ງກຸ່ມສຳພາດອອກເປັນ 3 ກຸ່ມຄື ກຸ່ມຊາວກະສິກອນ, ກຸ່ມບໍລິສັດ ແລະ ພະນັກງານຫ້ອງກະສິກຳ ແລະ ປ່າໄມ້ເມືອງ.

ຈາກການສຶກສາ ພົບວ່າສະພາບການຜະລິດພາຍໃຕ້ສັນຍາທີ່ເຮັດໃຫ້ຜະລິດຕະພາບຕົກຕໍ່າແມ່ນເກີດຈາກບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງ, ບັນຫາທາງດ້ານຂາດແຮງງານ, ແມງໄມ້ ແລະ ພະຍາດພືດລະບາດ, ສະພາບອາດກາດແຫ້ງແລ້ງ ແລະ ໜາວຈັດ ແລະ ຊາວກະສິກອນບໍ່ເຂົ້າໃຈເຕັກນິກໃນການຜະລິດ.

ຈາກສະພາບບັນຫາດັ່ງກ່າວ ທີ່ເຮັດໃຫ້ຜະລິດຕະພາບຂອງການຜະລິດຕົກຕໍ່າຂອງຊາວກະສິກອນ, ບັນດາທັງ 3 ພາກສ່ວນທີ່ກ່ຽວຂ້ອງຄື ຊາວກະສິກອນ, ບໍລິສັດ ແລະ ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ ເຂົາເຈົ້າໄດ້ເວົ້າວ່າ ບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງເຂົາເຈົ້າໄດ້ແກ້ໄຂດ້ວຍການເພີ່ມປະລິມານການໃສ່ປຸ໋ຍເຄມີຂຶ້ນແຕ່ລະລະດູການ ແລະ ພັກດິນ 2-3 ປີແລ້ວປູກໝູນວຽນພື້ນທີ່, ບັນຫາທາງດ້ານຂາດແຮງງານແກ້ໄຂດ້ວຍການຈ້າງແຮງງານເຂົ້າມາຊ່ວຍ ຫຼື ແລກປ່ຽນແຮງງານເຊິ່ງກັນ ແລະ ກັນ, ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດແກ້ໄຂດ້ວຍການນຳໃຊ້ສານເຄມີທີ່ເພີ່ມປະລິມານຄວາມເຂັ້ມຂຸ້ນຂຶ້ນ ຫຼື ນຳໃຊ້ຂ້າເປັນປະຈຳ ແລະ ບັນຫາທາງດ້ານເຕັກນິກ ເຂົາເຈົ້າແກ້ໄຂດ້ວຍການຈັດໃຫ້ຊາວກະສິກອນຖອດຖອນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໂດຍເອົາຊາວກະສິກອນສອນຊາວກະສິກອນເອົາຄອບຄົວທີ່ເປັນຕົວແບບແລກປ່ຽນບົດຮຽນກັບຄອບຄົວອື່ນໆ ແລະ ສະໜອງວິຊາການເພື່ອລົງໄປສົ່ງເສີມໃຫ້ແກ່ຊາວກະສິກອນ. ສ່ວນບັນຫາທາງດ້ານສະພາບດິນຟ້າອາກາດປ່ຽນແປງບໍ່ໄດ້ຮັບການແກ້ໄຂຍ້ອນເກີດຈາກສະພາບແວດລ້ອມທາງທຳມະຊາດ.

# ຄຳຂອບໃຈ

ຜ່ານການໄດ້ສຶກສາຮ່ຳຮຽນນຳຄູອາຈານ ແລະ ຜູ້ຊີ້ນຳໄລຍະການລົງຝຶກງານກ່ຽວກັບການສຶກສາເງື່ອນໄຂການຮັບປະກັນຄວາມຍືນຍົງ ທາງດ້ານຜະລິດຕະພາບຂອງການຜະລິດພາຍໃຕ້ສັນຍາຢູ່ ເມືອງບຸນເໜືອ ແຂວງຜົ້ງສາລີ ໃນການສຶກສາຄັ້ງນີ້ ແມ່ນໄດ້ຮັບທຶນສະໜັບສະໜູນຈາກໂຄງການ LEAP ປະຈຳກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ ເປັນໄລຍະເວລາ 5 ເດືອນ.

ດັ່ງນັ້ນຂ້າພະເຈົ້າຈຶ່ງຖືໂອກາດນີ້ສະແດງຄວາມຮູ້ບຸນຄຸນມາຍັງ ຄະນະບໍດີ ຄະນະກະເສດ ,ພາກວິຊາ ເສດຖະກິດຊົນນະບົດ ແລະ ເຕັກໂນໂລຊີອາຫານພ້ອມດ້ວຍບັນດາຄູອາຈານທຸກໆທ່ານທີ່ຖອດຖອນບົດຮຽນ ແລະ ອົບຮົມບົ່ມສອນໃຫ້ແກ່ຂ້າພະເຈົ້າຕະຫຼອດໄລຍະເວລາການສຶກສາຮ່ຳຮຽນ.

ຂອບໃຈ ແລະ ຮູ້ບຸນຄຸນມາຍັງທ່ານ ສົມໄຊ ສີຊານົນ, Mr Rakesh Munankami, ທ່ານ ພຸດທະສົນ ພົມມະຈັນ, ທ່ານ ນາງ ພອນປະເສີດ ຜາພູເງິນ ພ້ອມດ້ວຍພະນັກງານວິຊາການຂອງໂຄງການ LEAP ທີ່ອຳນວຍຄວາມສະດວກ, ແນະນຳ, ເບິ່ງແຍງ ແລະ ຊ່ວຍເຫຼືອທຸກສິ່ງທຸກຢ່າງໃນການລົງຝຶກງານຄັ້ງນີ້.

ຂອບໃຈ ແລະ ຮູ້ບຸນຄຸນມາຍັງທ່ານ ບຸນເຫຼັກ ຫຼ້າສຸກັນ, ທ່ານ ວົງພະຈິດ ວົງວິໄຊ, ທ່ານ ພູວຽງ ອຸລາພົມ ຕະຫຼອດເຖິງພະນັກງານຫ້ອງການກະສິກຳ-ປ່າໄມ້ ເມືອງບຸນເໜືອ ແຂວງຜົ້ງສາລີ ທີ່ອຳນວຍຄວາມສະດວກບໍ່ວ່າຈະເປັນທາງດ້ານຂໍ້ມູນ ແລະ ໜັງສືສະເໜີເຖິງທ້ອງຖິ່ນເຂດ 4 ບ້ານເປົ້າໝາຍ ແລະ ເຮັດໃຫ້ການເກັບກຳຂໍ້ມູນສຳເລັດລົງດ້ວຍດີ.

ຂອບໃຈ ແລະ ຮູ້ບຸນຄຸນມາຍັງທ່ານ ອາຈານ ລີຕິວ ເຈ່ຍຫຼື ທີ່ໃຫ້ຄຳປຶກສາ ແລະ ແນະນຳໃນການຂຽນບົດແຕ່ຕົ້ນຈົນສິ້ນສຸດບົດລາຍງານທ້າຍການສຶກສາ.

ຂອບໃຈມາຍັງບັນດາບໍລິສັດ ຕະຫຼອດເຖິງພໍ່ແມ່ປະຊາຊົນ ທີ່ສະລະເວລາໃນການສະໜອງຂໍ້ມູນໃຫ້ແກ່ຂ້າພະເຈົ້າ.

ໃນໂອກາດສຸດທ້າຍນີ້ ຂໍຂອບໃຈມາຍັງໝູ່ເພື່ອນໝົດທຸກຄົນທີ່ໄດ້ໃຫ້ຄຳປຶກສາຫາລືແລກປ່ຽນຄຳຄິດຄຳເຫັນ ແລະ ຊ່ວຍເຫຼືອຂ້າພະເຈົ້າຕະຫຼອດມາ.

ຂ້າພະເຈົ້າຂໍອວຍໄຊໃຫ້ພອນແດ່ທຸກໆທ່ານຈົ່ງມີແຕ່ຄວາມສຸກຄວາມຈະເລີນ, ປາສະຈາກໂລກໄພໄຂ້ເຈັບ ແລະ ສຳເລັດໃນໜ້າທີ່ວຽກງານ.

ມິຖຸນາ, 2012

ລິນສຸກ ບຸນວິໄຊ

# ສາລະບານ

**ສາລະບານ** **ໜ້າ**

ບົດຄັດຫຍໍ້ ... i
ຄຳຂອບໃຈ ... ii
ສາລະບານ ... iii
ສາລະບານຕາຕະລາງ ... vi
ສາລະບານຮູບ ... vii
ສັນຍາລັກ ແລະ ອັກສອນຫຍໍ້ ... viii
ບົດນຳ ... 1
ຈຸດປະສົງ: ... 2
1. ຄວາມໝາຍຂອງການເຮັດສັນຍາ ... 3
1.1. ຄວາມຮູ້ກ່ຽວກັບການຜະລິດກະສິກຳແບບມີຂໍ້ຜູກພັນໃນສັນຍາ. ... 3
1.2. ນິຍາມກ່ຽວກັບສັນຍາ ... 3
1.3. ໜ້າທີ່ຂອງສັນຍາ ... 3
1.4. ຄວາມໝາຍຂອງການຜະລິດພາຍໃຕ້ສັນຍາ ... 4
2. ສະພາບການຜະລິດພາຍໃຕ້ສັນຍາຢູ່ ສປປ ລາວ ... 4
2.1. ກົດໝາຍວ່າການເຮັດສັນຍາຜູກພັນຢູ່ ສປປ ລາວ ... 5
2.1.1. ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ... 5
2.1.2. ພາກສ່ວນທີ່ເຂົ້າຮ່ວມສັນຍາ ... 6
2.1.3. ເງື່ອນໄຂຂອງສັນຍາ ... 6
2.1.4. ຮູບການຂອງສັນຍາ ... 6
2.1.5. ເນື້ອໃນສັນຍາ ... 6

2.2. ຂໍ້ດີ ແລະ ຂໍ້ເສຍຂອງການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ ................ 7

2.2.1. ຂໍ້ດີຂອງການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ ........................... 7

2.2.2. ຂໍ້ເສຍຂອງການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ ....................... 7

2.3. ບັນຫາທີ່ເກີດຂຶ້ນຂອງການຜະລິດພາຍໃຕ້ສັນຍາຢູ່ເມືອງບຸນເໜືອ ແຂວງ ຜົ້ງສາລີ .. 8

2.3.1. ບັນຫາທາງບໍລິສັດພົບພໍ້ ............................................................................ 8

2.3.2. ບັນຫາທາງຜູ້ຜະລິດພົບພໍ້........................................................................... 9

2.3.3. ບັນຫາທີ່ອຳນາດການປົກຄອງພົບພໍ້ ............................................................. 9

2.4. ເງື່ອນໄຂທີ່ເຮັດໃຫ້ການຜະລິດພາຍໃຕ້ສັນຍາບໍ່ປະສົບຜົນສຳເລັດ (ຫຼົ້ມເຫຼວ) ຢູ່ເມືອງ ບຸນເໜືອ ແຂວງຜົ້ງສາລີ........................................................................................ 9

3. ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມການລົງທຶນ................................................ 10

3.1. ບາງນະໂຍບາຍກ່ຽວກັບການຜະລິດພືດອຸດສາຫະກຳ ຢູ່ ສປປ ລາວ.................... 11

3.1.1. ຮູບແບບການຜະລິດ 2+3 ....................................................................... 11

3.1.2. ຮູບແບບການຜະລິດ 1+4 ....................................................................... 11

3.2. ຫຼັກການກ່ຽວກັບການສົ່ງເສີມການລົງທຶນ ............................................................ 11

4. ສະພາບທົ່ວໄປຂອງສະຖານທີ່ສຶກສາ......................................................................... 12

4.1. ສະພາບທົ່ວໄປຂອງເມືອງບຸນເໜືອ ................................................................. 12

4.2. ສະພາບທົ່ວໄປຂອງບ້ານສຶກສາ ................................................................... 13

ອຸປະກອນ ແລະ ວິທີການ ................................................................................................ 16

1. ວິທີການ ................................................................................................................ 16

1.1. ສະຖານທີ່ຂອງການສຶກສາ ............................................................................... 16

1.2. ໄລຍະເວລາຂອງການສຶກສາ ........................................................................... 16

1.3. ວິທີການເກັບກຳຂໍ້ມູນ..................................................................................... 16

1.3.1. ຂໍ້ມູນມືສອງ ........................................................................................... 16

1.3.2. ຂໍ້ມູນມືໜຶ່ງ ............................................................................................ 16

1.4. ການວິເຄາະຂໍ້ມູນ ........ 17

ຜົນໄດ້ຮັບ ........ 18

1. ສະພາບການຜະລິດຂອງເຂດສຶກສາ ........ 18

1.1. ການປູກອ້ອຍ ........ 19

1.2. ການປູກມັນຝຣັ່ງ ........ 21

1.3. ການປູກໝາກນອດ ........ 22

1.4. ການປູກຊາ ........ 24

1.5. ການປ່ຽນແປງທາງດ້ານຜົນຜະລິດຂອງຊາວກະສິກອນ ........ 25

2. ບັນຫາທີ່ເຮັດໃຫ້ຜົນຜະລິດຕົກຕໍ່າ ........ 27

2.1. ບັນຫາທີ່ເຮັດໃຫ້ຜົນຜະລິດອ້ອຍຕົກຕໍ່າ ........ 27

2.2. ບັນຫາທີ່ເຮັດໃຫ້ຜົນຜະລິດໝາກນອດຕົກຕໍ່າ ........ 28

2.3. ລະດັບຄວາມສຳຄັນຂອງບັນຫາ ........ 28

2.4. ສາເຫດຂອງບັນຫາທີ່ພາໃຫ້ຜົນຜະລິດຕົກຕໍ່າ ........ 29

3. ວິທີແກ້ໄຂບັນຫາທີ່ເຮັດໃຫ້ຜົນຜະລິດຕະພາບຕົກຕໍ່າ ........ 31

3.1. ວິທີແກ້ໄຂບັນຫາຂອງຊາວກະສິກອນ ........ 31

3.2. ວິທີແກ້ໄຂບັນຫາຂອງບໍລິສັດ ........ 32

3.3. ວິທີແກ້ໄຂບັນຫາຂອງພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ........ 33

ສະຫຼຸບ ........ 33

ຂໍ້ສະເໜີ ........ 35

ເອກະສານອ້າງອີງ ........ 36

ເອກະສານຊ້ອນທ້າຍ ........ 38

# ສາລະບານຕາຕະລາງ

**ຕາຕະລາງ** **ໜ້າ**

1. ບັນດາບໍລິສັດທີ່ເຂົ້າມາລົງທຶນເຮັດການສົ່ງເສີມການປູກພືດເປັນສິນຄ້າຂອງເມືອງ
ບຸນເໜືອ.......................................................................................................... 18
2. ສາເຫດຂອງບັນຫາທີ່ເຮັດໃຫ້ຜົນຜະລິດຕົກຕ່ຳ ...................................................... 29

# ສາລະບານຮູບ

**ຮູບ** **ໜ້າ**

1. ເສັ້ນສະແດງຜະລິດຕະພາບຂອງການຜະລິດອ້ອຍຂອງຊາວກະສິກອນ ............................. 20
2. ເຕັກນິກການປູກອ້ອຍພາຍໃຕ້ສັນຍາຂອງປະຊາຊົນໃນເຂດເນີນສູງ................................. 21
3. ການປູກມັນຝຣັ່ງຢູ່ໃນພື້ນທີ່ນາຫຼັງການເກັບກ່ຽວຜະລິດເຂົ້ານາປີ...................................... 22
4. ເສັ້ນສະແດງຜະລິດຕະພາບຂອງການຜະລິດໝາກນອດຂອງຊາວກະສິກອນ...................... 23
5. ເຕັກນິກການປູກໝາກນອດໂດຍໃຊ້ຫຼວດເຫຼັກເປັນຄ້າງ .................................................. 23
6. ເສັ້ນສະແດງຜະລິດຕະພາບຂອງຜົນຜະລິດຊາ.............................................................. 24
7. ສວນຊາຂອງຊາວກະສິກອນທີ່ປູກໃນເຂດພື້ນທີ່ເນີນສູງອາຍຸ 3 ປີ ..................................... 25
8. ເສັ້ນສະແດງຜະລິດຕະພາບຂອງການຜະລິດພືດ 4 ຊະນິດ (T/ha).................................. 25
9. ເສັ້ນສະແດງຜະລິດຕະພາບຂອງການຜະລິດພືດ (T/ha) ຂອງເມືອງບຸນເໜືອສົກປີ 2009 - 2010............................................................................................................ 26
10. ແມງໄມ້ ແລະ ພະຍາດພືດທີ່ເກີດຂຶ້ນກັບອ້ອຍ ........................................................... 27
11. ເສັ້ນສະແດງລະດັບຄວາມສຳຄັນຂອງແຕ່ລະບັນຫາຂອງຊາວກະສິກອນ......................... 28
12. ການໃສ່ປຸ໋ຍເຄມີເພື່ອເລັ່ງການຈະເລີນເຕີບໂຕຂອງອ້ອຍທີ່ບໍ່ຖືກຕາມເຕັກນິກ .................. 30

**ຮູບຊ້ອນທ້າຍ** **ໜ້າ**

1. ເຕັກນິການນຳໃຊ້ສານເຄມີກຳຈັດແມງໄມ້, ພະຍາດພືດ ແລະ ວັດສະພືດໃນອ້ອຍທີ່ເປັນພາສາຈີນ ........................................................................ 39
2. ສານເຄມີ ແລະ ປຸ໋ຍເຄມີເປັນພາສາຈີນທີ່ນຳໃຊ້ເຂົ້າໃນການຜະລິດ ....................... 39
3. ພື້ນທີ່ການບຸກເບີກເພື່ອປູກອ້ອຍ .................................................................. 40
4. ການເກັບຊື້ອ້ອຍເພື່ອຂົນສົ່ງປ້ອນໃຫ້ກັບໂຮງງານເມືອງຫຼ້າປະເທດຈີນ ................... 40
5. ເຄື່ອໝາກນອດທີ່ນຳມາຕັດເປັນຕ່ອນນ້ອຍໆແລ້ວຕາກແຫ້ງເພື່ອຈຳໜ່າຍ .............. 40
6. ຜົນຜະລິດມັນຝຣັ່ງທີ່ຊາວກະສິກອນເກັບກູ້...................................................... 41
7. ຜະລິດຕະພັນຊາທີ່ອັດແຫ້ງເປັນກ້ອນ............................................................. 41

# ສັນຍາລັກ ແລະ ອັກສອນຫຍໍ້

## ສັນຍາລັກ

| | | |
|---|---|---|
| % | = | ສ່ວນຮ້ອຍ |
| - | = | ຫາ, ເຖິງ |
| / | = | ຕໍ່ |
| () | = | ວົງເລັບ |

## ພາສາລາວ

| | | |
|---|---|---|
| ຮຕ | = | ເຮັກຕາ |
| ລ/ດ | = | ລຳດັບ |

## ພາສາອັງກິດ

| | | |
|---|---|---|
| ha | = | hectare |
| Kg | = | Kilogram |
| T | = | ton |
| DAFO | = | District Agriculture and Forestry Office |
| LEAP | = | Laos Extension Agriculture Project |
| LAI | = | Lao Agro Industry |
| FPMG | = | Farming Product Market Group |

# ບົດນຳ

ພັກ ແລະ ລັດຖະບານຂອງ ສປປ ລາວ ໄດ້ໃຫ້ຄວາມສຳຄັນທາງດ້ານການກະສິກຳ ເປັນບູລິມະສິດອັນດັບໜຶ່ງເຂົ້າໃນການພັດທະນາປະເທດຊາດ ເພື່ອໃຫ້ປະເທດລາວຫຼຸດພົ້ນອອກຈາກກຸ່ມປະເທດດ້ອຍພັດທະນາພາຍໃນປີ 2020. ສະນັ້ນ, ຈຶ່ງມີແນວທາງໃນການພັດທະນາດ້ານການຜະລິດກະສິກຳ ໂດຍຫັນປ່ຽນຊັບພະຍາກອນທຳມະຊາດທີ່ມີຢູ່ແລ້ວໃຫ້ກາຍເປັນທຶນເພື່ອນຳເຂົ້າໃນການຜະລິດກະສິກຳເພື່ອບໍລິໂພກໃຫ້ພຽງພໍກັບຄວາມຕ້ອງການ ນອກຈາກໃຫ້ພຽງພໍກັບຄວາມຕ້ອງການພາຍໃນແລ້ວຍັງສາມາດໃຫ້ສົ່ງອອກຂາຍຕ່າງປະເທດ

ການຜະລິດພາຍໃຕ້ສັນຍາ ເປັນທາງອອກໜຶ່ງທີ່ເຮັດໃຫ້ຊາວກະສິກອນຫັນມາຜະລິດເປັນສິນຄ້າຫຼາຍຂຶ້ນໂດຍເຮັດໃຫ້ຊາວກະສິກອນຮູ້ວ່າຈະຜະລິດເພື່ອຂາຍໃຫ້ໃຜ ແລະ ຈະໄດ້ຂາຍໃນລາຄາເທົ່າໃດ. ການຜະລິດພາຍໃຕ້ສັນຍາເຮັດໃຫ້ຮູບແບບຂອງການຜະລິດມີລັກສະນະປ່ຽນແປງໄປຄື ມີການຫັນມານຳໃຊ້ເຕັກນິກໃໝ່ຫຼາຍຂຶ້ນເພື່ອໃຫ້ໄດ້ຜົນຜະລິດຫຼາຍຂຶ້ນ, ມີປະລິມານ ແລະ ຄຸນນະພາບເພື່ອເປັນການຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດຢ່າງພຽງພໍ, ແຕ່ໃນທາງກົງກັນຂ້າມບາງຄັ້ງການເຮັດສັນຍາອາດກໍ່ໃຫ້ເກີດຄວາມຫຍຸ້ງຍາກໃນການຜະລິດ. ດັ່ງນັ້ນ, ການຜະລິດແບບມີສັນຍາຈຶ່ງມີຄວາມສຳຄັນໃນວຽກງານສົ່ງເສີມການຜະລິດເປັນສິນຄ້າ ເພື່ອປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນໃຫ້ດີຂຶ້ນເທື່ອລະກ້າວ.

ເມືອງບຸນເໜືອ ແຂວງຜົ້ງສາລີ ກໍ່ເປັນອີກເມືອງໜຶ່ງທີ່ມີເງື່ອນໄຂເໝາະສົມ, ມີການສົ່ງເສີມການປູກພືດເປັນສິນຄ້າເຊັ່ນ: ອ້ອຍ, ຊາ, ມັນຝຣັ່ງ, ໝາກນອດ ແລະ ພືດອື່ນໆ ຈາກບົດລາຍງານທ້າຍການສຶກສາຂອງຄອນສະຫວັນ ແລະ ສຸກໄຊ, 2011 ໄດ້ເວົ້າວ່າ ສະພາບການຜະລິດພາຍໃຕ້ສັນຍາຂອງຊາວກະສິກອນຢູ່ ເມືອງບຸນເໜືອມີບັນຫາທາງດ້ານສະມັດຕະພາບຂອງຜົນຜະລິດຫຼຸດລົງ, ບັນຫາທາງດ້ານຂອງການແຜ່ລະບາດຂອງພະຍາດ ແລະ ແມງໄມ້ທີ່ຮ້າຍແຮງ, ບັນຫາທາງດ້ານການເຊື່ອມຄຸນນະພາບຂອງດິນ ແລະ ການນຳໃຊ້ສານເຄມີ.

ສະນັ້ນ, ຈຶ່ງເຮັດໃຫ້ຂ້າພະເຈົ້າມີຄວາມສົນໃຈສຶກສາຕໍ່ໃນຫົວຂໍ້ ສຶກສາເງື່ອນໄຂໃນການຮັບປະກັນຄວາມຍືນຍົງທາງຜະລິດຕະພາບຂອງການຜະລິດພາຍໃຕ້ສັນຍາ.

## ຈຸດປະສົງ:

- ສຶກສາສະພາບບັນຫາຂອງການຜະລິດພາຍໃຕ້ສັນຍາທີ່ເຮັດໃຫ້ຜະລິດຕະພາບຂອງຜົນຜະລິດກະສິກຳຕົກຕ່ຳ
- ສຶກສາແນວທາງໃນການຮັກສາຜະລິດຕະພາບຂອງການຜະລິດກະສິກຳພາຍໃຕ້ສັນຍາ

# ການຄົ້ນຄ້ວາເອກະສານ

## 1. ຄວາມໝາຍຂອງການເຮັດສັນຍາ

### 1.1. ຄວາມຮູ້ກ່ຽວກັບການຜະລິດກະສິກຳແບບມີຂໍ້ຜູກພັນໃນສັນຍາ.

ການຜະລິດກະສິກຳແບບມີຂໍ້ຜູກພັນໃນສັນຍາ ແມ່ນໄດ້ມີການຂະຫຍາຍຕົວຢ່າງວ່ອງໄວໃນຫວ່າງບໍ່ພໍເທົ່າໃດປີມານີ້ ໂດຍປະຕິບັດຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານທີ່ໄດ້ວາງອອກໃນໄລຍະປີ 1986-1988 ຄື ນະໂຍບາຍປ່ຽນແປງໃໝ່ໂດຍເປີດກ້ວາງການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ ແລະ ການຫັນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ ໂດຍໄດ້ກຳນົດການຜະລິດແບບຄອບຄົວດ້ວຍການນຳໃຊ້ທີ່ດິນ ແລະ ຮັບຮູ້ສິດນຳໃຊ້ທີ່ດິນຢ່າງຍາວນານຂອງຄອບຄົວຊາວກະສິກອນ ແລະ ພາກສ່ວນເສດຖະກິດຂອງລັດ, ລວມໝູ່ ແລະ ເອກະເທດອື່ນໆ. ພ້ອມດຽວກັນນັ້ນກໍ່ມີນະໂຍບາຍເປີດກວ້າງການພົວພັນຮ່ວມມື ແລະ ສົ່ງເສີມການລົງທຶນຕ່າງປະເທດ ຊຶ່ງການຜະລິດກະສິກຳແບບມີຂໍ້ຜູກພັນໃນສັນຍາແມ່ນຜະລິດຕະພົນໜຶ່ງຂອງກົນໄກເສດຖະກິດຕະລາດມັນໄດ້ສ້າງເງື່ອນໄຂໃຫ້ລະຫວ່າງກຸ່ມຜູ້ຊື້ ຫຼື ພໍ່ຄ້າ (ພາຍໃນ ແລະ ຕ່າງປະເທດ) ແລະ ຊາວກະສິກອນທ້ອງຖິ່ນສາມາດຕິດຕໍ່ພົວພັນຄ້າຂາຍນຳກັນໄດ້ ໂດຍຜ່ານກົນໄກອຳນວຍຄວາມສະດວກຈາກຂະແໜງການລັດທີ່ກ່ຽວຂ້ອງ ແລະ ລະບຽບກົດໝາຍຂອງ ສປປ ລາວ ໂດຍມີຈຸດປະສົງເພື່ອຜະລິດ, ຊື້-ຂາຍຜົນຜະລິດກະສິກຳ ໃນຮູບແບບຂອງສັນຍາ ດ້ວຍຄວາມສະໝັກໃຈ, ສະເໝີພາບ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດຂອງຄູ່ສັນຍາ. ຂໍ້ຜູກພັນໃນສັນຍາດັ່ງກ່າວໄດ້ແຜ່ຂະຫຍາຍຕັ້ງແຕ່ເໜືອຮອດໃຕ້, ສ່ວນໃຫຍ່ແມ່ນກຸ່ມຜູ້ຊື້ ຫຼື ຜູ້ສະໜັບສະໜູນເກັບຊື້ ແມ່ນມາຈາກປະເທດທີ່ມີຊາຍແດນຕິດກັບ ສປປ ລາວ ເຊັ່ນ: ໄທ, ຫວຽດນາມ ແລະ ຈີນ ເປັນຕົ້ນ (ມະໂນລົມ 2011).

### 1.2. ນິຍາມກ່ຽວກັບສັນຍາ

ສັນຍາແມ່ນການຕົກລົງລະຫວ່າງອົງການຈັດຕັ້ງດ້ວຍກັນ, ອົງການຈັດຕັ້ງກັບບຸກຄົນ ຫຼື ບຸກຄົນດ້ວຍກັນຊຶ່ງພາໃຫ້ສິດ ແລະ ພັນທະທາງແພ່ງເກີດຂຶ້ນ, ປ່ຽນແປງ ຫຼື ສິ້ນສຸດລົງ (ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ,1990).

### 1.3. ໜ້າທີ່ຂອງສັນຍາ

ສັນຍາມີພາລະໜ້າທີ່ສ້າງສາຍພົວພັນທາງດ້ານຊັບສິ່ງຂອງລະຫ່ວາງຂະແໜງການ ແລະ ພາກສ່ວນເສດຖະກິດຕ່າງໆ, ຍົກສູງຄວາມຮັບຜິດຊອບຂອງອົງການຈັດຕັ້ງ ແລະ ບຸກ

ຄືນຕໍ່ຂໍ້ຜູກພັນເພື່ອປັບປຸງ ແລະ ເສີມຂະຫຍາຍສາຍພົວພັນທາງດ້ານຊັບສິ່ງຂອງຊີວິດການເປັນຢູ່ປະຈຳວັນຂອງປະຊາຊົນ ແລະ ການພົວພັນການຄ້າເງິນຕາໃນພື້ນຖານເສດຖະກິດແຫ່ງຊາດ (ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ,1990).

### 1.4. ຄວາມໝາຍຂອງການຜະລິດພາຍໃຕ້ສັນຍາ

ການຜະລິດພາຍໃຕ້ສັນຍາ ແມ່ນຍຸດທະສາດໜຶ່ງເພື່ອຫຼຸດຜ່ອນອັດຕາຄວາມສ່ຽງໃນຜະລິດຕະພັນກ່ຽວກັບດ້ານກະສິກຳ ແລະ ການຈັດສິ່ງຜະລິດຕະພັນເຫຼົ່ານັ້ນໄປສູ່ຕະຫຼາດໂດຍການນຳໃຊ້ຂໍ້ຜູກພັນທີ່ເປັນທາງການ ຊຶ່ງກວມລວມເອົາການຕົກລົງເຫັນດີເປັນເອກະພາບລະຫວ່າງຊາວກະສິກອນ ແລະ ຜູ້ເກັບຊື້.

ສັນຍາການກະສິກຳຈະເປັນການສ້າງຕະຫຼາດທີ່ໜ້າເຊື່ອຖື ແລະ ໝັ້ນຄົງໃຫ້ແກ່ຊາວກະສິກອນ ແລະ ເປັນການສະໜອງທີ່ໝັ້ນຄົງໃຫ້ແກ່ຜູ້ຊື້ ຫຼື ຜູ້ແປຮູບຝ່າຍໜຶ່ງ ຫຼື ທັງສອງຝ່າຍອາດຈະໄດ້ກຳໄລອັນມະຫາສານ, ໂອກາດທີ່ຈະປະສົບຜົນສຳເລັດໄດ້ໃນການເຮັດສັນຍານັ້ນຕ້ອງຖືວ່າທັງສອງຝ່າຍເທົ່າທຽມກັນ, ໄດ້ຮັບຜົນປະໂຫຍດນຳກັນຈາກການຕົກລົງນັ້ນ. ໝາຍຄວາມວ່າ: ພວກເຂົາໄດ້ກ່າວເຂົ້າສູ່ ແລະ ເຮັດສັນຍາດ້ວຍຄວາມຕັ້ງໃຈ ແລະ ເປັນອິດສະຫຼະຂອງພວກເຂົ້າ. ສັນຍາທີ່ສົມບູນໄດ້ກໍ່ຕໍ່ເມື່ອທັງສອງຝ່າຍ, ຍອມຮັບ ແລະ ຕົກລົງກັນເປັນໜ້າທີ່ພັນທະທີ່ໜັກແໜ້ນຫາກບໍ່ແມ່ນການຕົກລົງ ຫຼື ໃຫ້ຄຳໝັ້ນສັນຍາແບບທຳດາໄດ້. ສັນຍາໃນຕົວມັນເອງແລ້ວໄດ້ສ່ອງແສງໃຫ້ເຫັນສິດຜົນປະໂຫຍດ ແລະ ຈຸດປະສົງເປົ້າໝາຍຂອງຜູ້ຜະລິດເປັນຜູ້ເລີ່ມຫາກບໍ່ແມ່ນທຸກໆຝ່າຍ (David Fullbrook, 2007).

## 2. ສະພາບການຜະລິດພາຍໃຕ້ສັນຍາຢູ່ ສປປ ລາວ

ການເຮັດສັນຍາກະສິກຳແມ່ນໄດ້ມີການຂະຫຍາຍຕົວຢ່າງໄວວາຢູ່ໃນ ສປປ ລາວ ໃນປັດຈຸບັນຄວາມຕ້ອງການໃນການຜະລິດຕະພັນກະສິກຳຢູ່ພາຍໃນປະເທດສູງຂຶ້ນ ເນື່ອງຈາກການຂະຫຍາຍຂອງຕົວເມືອງ, ການຊອກຫາຕະລາດຮັບຮອງໃຫ້ແກ່ການຜະລິດກະສິກຳຂະໜາດນ້ອຍໂດຍສະເພາະແມ່ນພາກສ່ວນທີ່ຕັ້ງຢູ່ໃກ້ກັບໃຈກາງເມືອງ ແລະ ຄວາມຕ້ອງການຜະລິດຕະພັນກະສິກຳຢູ່ໃນພາກພື້ນອາຊີກໍ່ໄດ້ເພີ່ມຂຶ້ນເຊັ່ນດຽວກັນໂດຍສະເພາະປະເທດໄທ, ຫວຽດນາມ, ຈີນ ແລະ ປະເທດອື່ນໆ ຂອງຜະລິດຕະພັນກະສິກຳບາງປະເພດຄື ປ່ານ, ປໍສາ, ຖົ່ວເຫຼືອງ ແລະ ໝາກເດືອຍ ຊຶ່ງຜະລິດຕະພັນເຫຼົ່ານີ້ສ່ວນຫຼາຍແມ່ນຜະລິດຢູ່ ສປປ ລາວ.

ການເຮັດສັນຍາກະສິກຳສາມາດຈັດຕັ້ງໄດ້ຫຼາຍຮູບແບບ, ເລີ່ມຕັ້ງແຕ່ການເຮັດສັນຍາຕົກລົງດ້ວຍປາກຕໍ່ປາກລະຫວ່າງຊາວກະສິກອນ ແລະ ຜູ້ເກັບຊື້ໄປສູ່ການເຮັດສັນຍາເປັນລາຍລັກອັກສອນ ແລະ ກຳນົດສິດພັນທະຂອງແຕ່ລະຝ່າຍຢ່າງລະອຽດ. ເຖິງຢ່າງໃດກໍ່ຕາມການເຮັດ

ສັນຍາກະສິກຳຢູ່ ສປປ ລາວ ສ່ວນໃຫຍ່ແມ່ນການເຮັດຂໍ້ຜູກມັດກັນຢ່າງເປັນທາງການລະຫວ່າງຊາວກະສິກອນ ແລະ ພໍ່ຄ້າຄົນກາງ ຊຶ່ງດຳເນີນການຢູ່ນອກຂອບເຂດກົດໝາຍ. ບໍລິສັດອາດຟ້ອງເອົາຄ່າເສຍຫາຍໄດ້ຖ້າຜູ້ຜະລິດລະເມີດສັນຍາ ໂດຍການຂາຍຜົນຜະລິດຂອງຕົນໃນທ້ອງຕະຫຼາດ. ກົງກັນຂາມຜູ້ຜະລິດກໍ່ສາມາດຮ້ອງຟ້ອງເອົາຄ່າເສຍຫາຍຈາກບໍລິສັດໄດ້ຖ້າຫາກບໍລິສັດທີ່ເຮັດສັນຍາບໍ່ຊົດເຊີຍຄ່າຜົນຜະລິດຕ່ຳ ຫຼື ບໍ່ເກັບຊື້ຜົນຜະລິດພາຍຫຼັງເກັບກ່ຽວ. ໃນບັນດາກໍລະນີດັ່ງກ່າວແມ່ນບໍ່ມີວິທີ ຫຼື ຊ່ອງທາງກົດໝາຍສຳລັບຜູ້ຜະລິດ ຫຼື ບໍລິສັດທີ່ຈະຮ້ອງຟ້ອງເອົາຄ່າເສຍຫາຍຄືນໄດ້.

ການເຮັດສັນຍາປູກສາລີຫວານເພື່ອປ້ອນໂຮງງານແປຮູບກະເສດລາວຢູ່ ແຂວງວຽງຈັນແມ່ນບໍລິສັດອຸດສາຫະກຳການກະເສດລາວຈຳກັດ (LAI) ໂດຍການຮ່ວມທຶນຂອງລາວ-ໄທ ຊຶ່ງວ່າໄທເປັນຜູ້ຜະລິດ ແລະ ສົ່ງອອກ. ບໍລິສັດດັ່ງກ່າວຈັດຕັ້ງປະຕິບັດຢູ່ສປປ ລາວ ເລີ່ມແຕ່ປີ 1994 ໄດ້ແປຮູບໜໍ່ໄມ້, ສາລີຫວານ, ໝາກມ່ວງ ແລະ ໝາກຕາວເຊື່ອມ. ໂຮງງານໄດ້ເຮັດສັນຍາກັບຄອບຄົວຊາວກະສິກອນເພື່ອຜະລິດສາລີຫວານ ແລະ ກຸ່ມຕະຫຼາດ (FPMG) ເພື່ອຮອງຮັບສາລີຫວານອັດກະປ໋ອງ. ບໍລິສັດໄດ້ສະໜອງສິນເຊື່ອແນວພັນ ແລະ ປຸ໋ຍ ສ່ວນລັດຖະບານລາວໄດ້ສະໜອງສິນເຊື່ອເພື່ອການກຽມດິນ. ຊຶ່ງໃນການເຮັດສັນຍາເມື່ອກ່ອນໃນປີ 2006-2007 ມີທັງໝົດ 11 ຄອບຄົວ ມີເນື້ອທີ່ທັງໝົດ 3.5 ha ເພື່ອປູກພືດໃນລະດູແລ້ງ. ບໍລິສັດໄດ້ມີເປົ້າໝາຍເພີ່ມເນື້ອທີ່ການຜະລິດໃຫ້ໄດ້ປະມານ 160 ha ເພື່ອໃຫ້ໄດ້ຜົນຜະລິດຂອງສາລີຫວານ 2,000 T(www.adbi.org).

## 2.1. ກົດໝາຍວ່າການເຮັດສັນຍາຜູກພັນຢູ່ ສປປ ລາວ

### 2.1.1. ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ

ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາແມ່ນກົດໝາຍທີ່ປະກາດໃຊ້ໂດຍຜູ້ວ່າການແທນປະທານປະເທດແຫ່ງ ສປປ ລາວ ທ່ານ ພູມີ ວົງວິຈິດ, ສະບັບທີ່ 41/ປທປຫລົງວັນທີ 27 ກໍລະກົດ ປີ 1990, ໂດຍອີງຕາມມະຕິຂອງກອງປະຊຸມຜູ້ແທນປະຊາຊົນທົ່ວປະເທດ ຄັ້ງວັນທີ່ 2 ທັນວາ 1975 ວ່າດ້ວຍການແຕ່ງຕັ້ງປະທານປະເທດ, ອີງຕາມກົດໝາຍວ່າດ້ວຍສະພາປະຊາຊົນສູງສຸດແຫ່ງ ສປປ ລາວ ສະບັບເລກທີ 04/ສປສ ລົງວັນທີ່ 19 ເມສາ 1988 ແລະ ອີງຕາມມະຕິຕົກລົງຂອງກອງປະຊຸມຄັ້ງທີ່ 4 ສະໄໝວິສາມັນຂອງສະພາປະຊາຊົນສູງສຸດຊຸດທີ່ II ກ່ຽວກັບການຮັບຮອງເອົາກົດໝາຍວ່າຂໍ້ຜູກພັນໃນສັນຍາສະບັບເລກທີ 02/09/ສປສ ລົງວັນທີ່ 10 ກໍລະກົດ 1990.

2.1.2. <u>ພາກສ່ວນທີ່ເຂົ້າຮ່ວມສັນຍາ</u>

ສັນຍາອາດຈະເຮັດຂຶ້ນລະຫ່ວາງອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ດ້ວຍກັນ; ອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ກັບນິຕິບຸກຄົນອື່ນ ຫຼື ບຸກຄົນ; ນິຕິບຸກຄົນ ຫຼື ບຸກຄົນດ້ວຍກັນ.

2.1.3. <u>ເງື່ອນໄຂຂອງສັນຍາ</u>

ສັນຍາທີ່ຖືກຕ້ອງປະດ້ວຍເງື່ອນໄຂດັ່ງນີ້:

- ຄວາມສະມັກໃຈຂອງຄູ່ສັນຍາ.
- ຄວາມສາມາດທາງດ້ານການປະພຶດຂອງຄູ່ສັນຍາ.
- ຈຸດປະສົງຂອງສັນຍາຕ້ອງຊັດເຈນ, ມີຈິງ ແລະ ຖືກຕ້ອງຕາມກົດໝາຍ
- ເຫດຜົນຂອງສັນຍາຕ້ອງຖືກຕ້ອງຕາມກົດໝາຍ.
- ຮູບການຂອງສັນຍາຕ້ອງສອດຄ່ອງກັບການກຳນົດຂອງກົດໝາຍ.

2.1.4. <u>ຮູບການຂອງສັນຍາ</u>

ຮູບການຂອງສັນຍາມີ 2 ຮູບແບບຄື ສັນຍາປາກເປົ່າເຮັດໃນກໍລະນີທີ່ສັນຍາຫາກມີມູນຄ່າແຕ່ຫ້າພັນກີບລົງມາເວັ້ນເສຍແຕ່ສັນຍາຢືມຊັບສິ່ງຂອງໄປໃຊ້ ແລະ ສັນຍາທີເປັນລາຍລັກອັກສອນ ຊຶ່ງສັນຍາທີ່ເຮັດເປັນລາຍລັກອັກສອນນັ້ນຕ້ອງລົງວັນທີ ແລະ ມີລາຍເຊັນຂອງຄູ່ສັນຍາ. ສັນຍາອາດຈະຂຽນດ້ວຍມື ຫຼື ພິມດີດກໍ່ໄດ້ ຊຶ່ງສະແດງອອກໃນ 3 ຮູບການຄື

- ສັນຍາທີ່ເຮັດຊ້ອງໜ້າພະນັກງານທະບຽນສານແຫ່ງລັດ ຫຼື ນາຍບ້ານພ້ອມດ້ວຍພະຍານສາມຄົນ.

- ສັນຍາທີ່ເຮັດຂຶ້ນໂດຍຄູ່ສັນຍາເອງ ແລະ ຢັ້ງຢືນໂດຍພະນັກງານທະບຽນສານແຫ່ງລັດ ຫຼື ນາຍບ້ານ.

- ສັນຍາທີ່ເຮັດໃຫ້ເກີດຂຶ້ນ ໂດຍຄູ່ສັນຍາດ້ວຍກັນເທົ່ານັ້ນສັນຍາລະຫວ່າງອົງການຈັດຕັ້ງຂອງລັດ ຫຼື ລວມໝູ່ດ້ວຍກັນ, ສັນຍາລະຫວ່າງອົງການຈັດຕັ້ງກັບບຸກຄົນຕ້ອງເຮັດເປັນລາຍລັກອັກສອນ.

2.1.5. <u>ເນື້ອໃນສັນຍາ</u>

ເນື້ອໃນສັນຍາ ແມ່ນຂໍ້ຕົກລົງທີ່ເປັນປະຈຳ ຊຶ່ງພາໃຫ້ຄູ່ສັນຍາຕ້ອງປະຕິບັດສິດ ແລະ ພັນທະຕໍ່ກັນຄຳຕົກລົງນັ້ນອາດຈະປະກອບດ້ວຍ: ເປົ້າໝາຍ, ລາຄາ, ກຳນົດລາຄາປະຕິບັດ, ການສຳລະສະສາງ, ການນຳສົ່ງ, ຂອບເຂດ, ປະລິມານ ແລະ ຄຸນນະພາບຂອງຂໍ້ຜູກພັນ ແລະ ພັນທະໃນການແຈ້ງໃຫ້ແກ່ກັນຊາບ, ຜົນສະທ້ອນຂອງການລະເມີດຂໍ້ຜູກພັນ, ອົງການທີ່ຈະ

ເປັນຜູ້ແກ້ໄຂຂໍ້ຂັດແຍ່ງ, ເງື່ອນໄຂຂອງການປ່ຽນແປງ ແລະ ການສິ້ນສຸດສັນຍາກ່ອນກຳນົດເປົ້າໝາຍ, ລາຄາ, ກຳນົດລາຄາປະຕິບັດ ແມ່ນເນື້ອໃນອັນຈຳເປັນສຳລັບສັນຍາທຸກປະເພດ

### 2.2. ຂໍ້ດີ ແລະ ຂໍ້ເສຍຂອງການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ

#### 2.2.1. ຂໍ້ດີຂອງການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ

- ຊາວກະສິກອນມີຜົນຜະລິດຂາຍແນ່ນອນສາມາດນຳວັດຖຸດິບປ້ອນເຂົ້າສູ່ຂະບວນການຜະລິດໄດ້ຢ່າງສະໝໍ່າສະເໝີ ແລະ ເປັນການຮັບປະກັນລາຍໄດ້ຮັບປະກັນລາຄາສິນຄ້າລ່ວງໜ້າ ຊຶ່ງແຕ່ລະທ້ອງຖິ່ນມີລາຍລະອຽດບໍ່ຄືກັນ

- ຊາວກະສິກອນໄດ້ຮັບຄວາມຮູ້ທັງທາງດ້ານວິຊາການ ການອອກແບບມາດຕະຖານແຜນການຜະລິດກະສິກຳ ແລະ ວິຊາການປັບຫຼຸດຕົ້ນທຶນການຜະລິດພ້ອມທັງກະກຽມວັດຖຸດິບ ແລະ ປັດໃຈການຜະລິດຕ່າງໆອາດລວມເຖິງການສະໜັບສະໜູນສິນເຊື່ອທາງການເງິນ

- ຜົນຜະລິດໄດ້ມາດຕະຖານດຽວກັບທີ່ທາງບໍລິສັດກຳນົດ ແລະ ຖືກຕ້ອງຕາມຄວາມຕ້ອງການຂອງຕະຫຼາດ

- ຊ່ວຍໃຫ້ຊາວກະສິກອນເພີ່ມປະສິດທິພາບການບໍລິຫານ ແລະ ຈັດການຊ່ວຍຫຼຸດພາລະງົບປະມານຂອງລັດໃນການຮັບປະກັນລາຄາສິນຄ້າກະສິກຳຕະຫຼອດ ຈົນຊ່ວຍເພີ່ມໂອກາດສ້າງວຽກເຮັດງານທຳໃນພາກກະສິກຳ

- ເປັນການເພີ່ມປະສິດທິພາບການແບ່ງປັນຈາກບໍລິສັດເພາະມີວັດຖຸດິບສະໝໍ່າສະເໝີຄວບຄຸມຕົ້ນທຶນໄດ້ສາມາດຄາດຄະເນວາງແຜນການຕະຫຼາດລວມທັງບໍລິສັດຍັງປະຢັດໄດ້ຈາກຂະໜາດກິດຈະກຳ

#### 2.2.2. ຂໍ້ເສຍຂອງການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ

- ການເຮັດສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາ ພາກສ່ວນເອກະຊົນມັກຈະເຮັດສັນຍາແບບເອົາປຽບຊາວກະສິກອນ ໃນເລື່ອງຂອງຜົນຜະລິດຕອບແທນ ແລະ ຄວາມເປັນທຳ.

- ເງິນລົງທຶນໃສ່ຟາມຂ້ອນຂ້າງສູງ ປຽບທຽບກັບລາຍໄດ້ທີ່ຈະເກີດຂຶ້ນເຮັດໃຫ້ການຄືນທຶນຕ້ອງໃຊ້ເວລາດົນຫຼາຍປີ ຂະນະທີ່ແຫຼ່ງເງິນທຶນຂອງຊາວກະສິກອນມາຈາກການກູ້ຢືມຈາກສະຖາບັນການເງິນ ດັ່ງນັ້ນ, ບໍລິສັດຍົກເລີກສັນຍາກະສິກຳແບບມີຂໍ້ຜູກພັນໃນສັນຍາໄລຍະສັ້ນ ຫຼື ບໍ່ວາງແຜນການຜະລິດໃຫ້ຊາວກະສິກອນອາດລົ້ມລະລາຍໄດ້

ນອກຈາກນີ້ຍັງພົບວ່າສັດສ່ວນຂອງລາຍຈ່າຍ (ຕົ້ນທຶນ) ຕໍ່ລາຍໄດ້ຂອງຟາມຂ້ອນຂ້າງສູງປະມານ 27 - 29% ຈຶ່ງຖືວ່າມີຄວາມສ່ຽງຂ້ອນຂ້າງຫຼາຍ

- ຊາວກະສິກອນມີຄວາມສ່ຽງສູງ ແລະ ສ່ຽງສູງຂຶ້ນເມື່ອໄດ້ຮັບຜົນກະທົບທາງທຳມະຊາດເຊັ່ນ: ນ້ຳຖ້ວມ, ໄພແຫ້ງແລ້ງ, ພະຍາດສັດລະບາດເປັນຕົ້ນ ນອກຈາກນີ້ຍັງມີຄວາມສ່ຽງໃນການສູນເສຍຜົນຜະລິດຫຼາຍຂຶ້ນເມື່ອລວມຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຈາກການດຳເນີນງານເຊັ່ນ: ຄ່າໄຟ, ຄ່າປຸ໋ຍ, ຄ່າຢາ ແລະ ອື່ນໆ (ມະໂນລິນ,2011)

- ມີຄວາມສ່ຽງທາງດ້ານການເຊື່ອມຄຸນນະພາບຂອງດິນ ຊຶ່ງເກີດຈາກການປູກພືດຊະນິດດຽວເປັນໄລຍະຍາວ

- ການຜະລິດພາຍໃຕ້ສັນຍາ ມີຄວາມສຽງຕໍ່ການນຳໃຊ້ສານເຄມີຫຼາຍຂຶ້ນ ເພື່ອຄວບຄຸມການລະບາດຂອງແມງໄມ້ ແລະ ພະຍາດພືດ ຊຶ່ງມີຄວາມເປັນພິດຫຼາຍຕໍ່ກັບຜູ້ທີ່ໄດ້ຮັບຈາກສານເຄມີນີ້ຈະພາໃຫ້ເກີດຄວາມສ່ຽງຕໍ່ການເສຍຊີວິດ, ໃນກໍລະນີຮ່າງກາຍຂອງຄົນເຮົາສະສົມສານເຄມີໄວ້ໃນໄລຍະຍາວອາດຈະພາໃຫ້ເກີດເປັນມະເຮັງ, ພະຍາດສັ່ນ ແລະ ພະຍາດອື່ນໆທີ່ຕາມມາ. ນອກຈາກນັ້ນ, ສານເຄມີຍັງມີຜົນກະທົບຕໍ່ກັບສິ່ງເວດລ້ອມເມື່ອມີການນຳໃຊ້ສານເຄມີຈຳນວນໜຶ່ງກໍ່ລະເຫີຍອາຍປົວຂຶ້ນສູ່ບັນຍາກາດ ຫຼັງຈາກນັ້ນນ້ຳຝົນກໍ່ຈະເປັນພາຫະນະນຳເອົາສານເຄມີດັ່ງກ່າວກັບຄືນສູ່ພື້ນດິນ ແລະ ອີກສ່ວນໜຶ່ງຊຶມລົງດິນຖືກຮາກພືດດູດເອົາໄວ້ ແລະ ໄຫຼລົງສູ່ແມ່ນ້ຳເຮັດໃຫ້ຄົນ ແລະ ສັດໄດ້ຮັບສານພິດຕົກຄ້າງ. ຊຶ່ງສານເຄມີຕົກຄ້າງໃນດິນນີ້ສາມາດຄົງຢູ່ເປັນເວລາດົນ (ບໍ່ເຊື່ອມເສຍ ແລະ ລະເຫີຍອາຍງ່າຍ) (ສຸກໄຊ ແລະ ຄອນສະຫວັນ 2011).

## 2.3. ບັນຫາທີ່ເກີດຂຶ້ນຂອງການຜະລິດພາຍໃຕ້ສັນຍາຢູ່ເມືອງບຸນເໜືອ ແຂວງ ຜົ້ງສາລີ

ບັນຫາທີ່ເກີດຂຶ້ນຈາກການຜະລິດພາຍໃຕ້ສັນຍາຢູ່ເມືອງບຸນມີຄື

### 2.3.1. ບັນຫາທາງບໍລິສັດພົບພໍ້

- ການເຜີຍແຜ່ສັນຍາຫຍຸ້ງຍາກ.

- ຊາວກະກອນມີຄວາມຮູ້ທາງດ້ານພາສາຍັງຈຳກັດ ເຮັດໃຫ້ການເຂົ້າໃຈສັນຍາໄດ້ຍາກ.

- ຊາວກະສິກອນບໍ່ປະຕິບັດເປັນໄປຕາມສັນຍາເຊັ່ນ: ຜະລິດບໍ່ໄດ້ຕາມຄຸນນະພາບມີການລັກລອບຂາຍຜົນຜະລິດ.

2.3.2. <u>ບັນຫາທາງຜູ້ຜະລິດພິບພໍ້</u>

- ຊາວກະສິກອນຂາດຄວາມຮູ້ ແລະ ປະສົບການໃນການເຮັດສັນຍາການຜະລິດ.

- ບໍລິສັດຊ່ວຍໂອກາດປະຕິບັດເກີນສັນຍາ

- ພະນັກງານບັນດາອົງການ, ກົມກອງ ຈັດພະນັກງານສົ່ງເສີມລົງຕິດຕາມກວດກາບໍ່ເປັນໄປຕາມກຳນົດເວລາ.

- ບັນຫາທາງດ້ານສະບຽງອາຫານບໍ່ພຽງ ເນື່ອງຈາກເຮັດກິດຈະກຳດຽວ (ປູກພືດຕາມສັນຍາ).

2.3.3. <u>ບັນຫາທີ່ອຳນາດການປົກຄອງພິບພໍ້</u>

- ຂາດການຊີ້ນຳຂອງພະນັກງານທີ່ກ່ຽວຂ້ອງ ບໍ່ເປັນໄປຕາມກຳນົດເວລາ

- ການແກ້ໄຂບັນຫາທີ່ເກີດຂຶ້ນຍັງຊັກຊ້າ

- ການຄຸ້ມຄອງຕິດຕາມຂອງອຳນາດການປົກຄອງບ້ານຍັງປະຕິບັດບໍ່ໄດ້ດີ (ສຸກໄຊ ແລະ ຄອນສະຫວັນ, 2011).

## 2.4. ເງື່ອນໄຂທີ່ເຮັດໃຫ້ການຜະລິດພາຍໃຕ້ສັນຍາບໍ່ປະສົບຜົນສຳເລັດ (ຫຼົ້ມເຫຼວ) ຢູ່ເມືອງບຸນເໜືອ ແຂວງຜົ້ງສາລີ

ເງື່ອນໄຂ ທີ່ເປັນຄວາມສ່ຽງອາດເຮັດໃຫ້ການດຳເນີນກິດຈະການຂອງໂຄງການພົບຄວາມຫຼົ້ມເຫຼວມີດັ່ງນີ້:

- ການຄັດເລືອກໂຄງການສົ່ງເສີມຂອງອຳນາດການປົກຄອງແຕ່ລະຂັ້ນ ຖ້າຫາກວ່າບໍ່ເໝາະສົມຕໍ່ກັບສະພາບຄວາມເປັນຈິງຂອງຊາວກະສິກອນແມ່ນເຮັດໃຫ້ຊາວກະສິກອນຂາດແຮງຈູງໃຈໃນການຜະລິດ ຊຶ່ງມັນສະແດງອອກໃນການດຳເນີນກິດຈະກຳຂອງຊາວກະສິກອນບາງຄອບຄົວແມ່ນບໍ່ມີຄວາມກະຕືລືລົ້ນ ໃນການຜະລິດເຮັດໃຫ້ຜົນຜະລິດຕົກຕໍ່າບໍ່ວ່າຈະເປັນທາງດ້ານປະລິມານ ຫຼື ຄຸນນະພາບຍິ່ງໄປກ່ວານັ້ນບາງຄອບຄົວແມ່ນໄດ້ມີການຢຸດຕິໃນການທຳການຜະລິດຊຶ່ງເປັນສາເຫດເຮັດໃຫ້ໂຄງການອາດຈະບໍ່ມີຄວາມຍືນຍົງ ຫຼື ປະສົບກັບຄວາມຫຼົ້ມເຫຼວໄດ້.

- ການປະຕິບັດຕົວຈິງຂອງຄູ່ຮ່ວມສັນຍາແມ່ນບໍ່ເປັນໄປຕາມເນື້ອໃນສັນຍາທີ່ໄດ້ລະບຸໄວ້ໃນເບື້ອງຕົ້ນ ຫຼື ເກີດຄວາມບົກຜ່ອງຕໍ່ພາລະບົດບາດຂອງຕົນໃນການຈັດຕັ້ງດຳເນີນກິດຈະກຳຕ່າງໆຂອງແຕ່ລະຝ່າຍເຊັ່ນ: ການເກັບຊື້ຜົນຜະລິດຂອງບໍລິສັດ ແມ່ນບໍ່ໄປຕາມ

ສັນຍາ (ເກັບຊື້ບໍ່ໝົດ) ລາຄາຂອງຜົນຜະລິດແມ່ນບໍ່ເປັນໄປຕາມລາຄາຕະຫຼາດ ຫຼື ລາຄາທີ່ຄໍ້າປະກັນໄວ້ໃນສັນຍາ. ຜູ້ຜະລິດຖືເບົາຕໍ່ສັນຍາຊຶ່ງສະແດງໃຫ້ເຫັນໃນການລັກລອບ ຂາຍຜົນຜະລິດຂອງຕົນໃຫ້ກັບພາກສ່ວນອື່ນທີ່ບໍ່ແມ່ນຄູ່ຮ່ວມສັນຍາເມື່ອເຫັນວ່າໄດ້ລາຄາທີ່ສູງກ່ວາ

- ຮູບແບບວິທີການຂອງການເຂົ້າມາລົງທຶນຖ້າບໍ່ເປັນໄປຕາມຂັ້ນຕອນຂອງການລົງທຶນທີ່ມີຢູ່ແລ້ວນັ້ນ ແມ່ນອາດຈະກາຍເປັນຊ່ອງຫວ່າງທີ່ເຮັດໃຫ້ເກີດມີການລະເມີດສັນຍາຢ່າງງ່າຍດາຍເພາະວ່າສັນຍາທີ່ສ້າງຂຶ້ນໂດຍບໍ່ປະຕິບັດຕາມຂັ້ນຕອນຂອງການລົງທຶນນັ້ນແມ່ນມັກຈະສ້າງຂຶ້ນລະຫວ່າງບໍລິສັດກັບຊາວກະສິກອນ ຊຶ່ງຈະມີພາກສ່ວນຂອງອຳນາດການປົກຄອງທີ່ກ່ຽວຂ້ອງເຂົ້າມາມີບົດບາດກັບການລົງທຶນທີ່ໄດ້ລະບຸໄວ້ໃນກົດໝາຍການລົງທຶນ.

- ການຜະລິດພາຍໃຕ້ສັນຍາ ເປັນການຜະລິດທີ່ມີຂໍ້ຜູກມັດທັງສອງຝ່າຍຄູ່ຮ່ວມສັນຍາ ຊຶ່ງດຳເນີນໄປບົນພື້ນຖານຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດແຕ່ສິ່ງທີ່ມັກພົບພໍ້ ແລະ ເກີດຂຶ້ນຢູ່ເລື້ອຍໆນັ້ນແມ່ນການລະເມີດເນື້ອໃນສັນຍາ ບາງຄັ້ງແມ່ນເກີດຈາກພາກສ່ວນຜູ້ລົງທຶນ ຫຼື ບາງຄັ້ງແມ່ນເກີດຈາກພາກສ່ວນຜູ້ຜະລິດເອງ ຊຶ່ງການເຂົ້າຮ່ວມແກ້ໄຂບັນຫາແມ່ນຕ້ອງມີພາກສ່ວນທີ່ເປັນກາງເຊັ່ນ: ອຳນາດການປົກຄອງຂະແໜງການຕ່າງໆທີ່ກ່ຽວຂ້ອງ ທີ່ລະບຸໄວ້ໃນສັນຍາເບື້ອງຕົ້ນເຊິ່ງການແກ້ໄຂບັນຫາທີ່ເກີດຂຶ້ນນັ້ນ ແມ່ນຕ້ອງມີຄວາມເໝາະສົມ, ຖືກຕ້ອງ ແລະ ເປັນທຳທີ່ສຸດ ຊຶ່ງຖ້າຫາກແກ້ໄຂບັນຫາທີ່ເກີດຂຶ້ນນັ້ນຫາກບໍ່ມີຄວາມເໝາະສົມແມ່ນຈະເຮັດໃຫ້ຜິດຖືກລະເມີດເກີດຄວາມບໍ່ພໍໃຈ, ບໍ່ເຊື່ອໝັ້ນຕໍ່ການແກ້ໄຂບັນຫາ ຊຶ່ງເປັນສາເຫດເຮັດໃຫ້ຜູ້ຖືກລະເມີດຂາດຄວາມໝັ້ນໃຈໃນການດຳເນີນກິດຈະກຳທີ່ອາດນຳໄປສູ່ການຢຸດເຊົາກິດຈະກຳໄປໃນທີ່ສຸດ (ສຸກໄຊ ແລະ ຄອນສະຫວັນ, 2011).

## 3. ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມການລົງທຶນ

ລັດສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດດ້ວຍການວາງແຜນນະໂຍບາຍເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກຕ່າງໆ ເປັນຕົ້ນການກຳນົດທິດທາງ, ການສະໜອງຂໍ້ມູນຂ່າວສານທີ່ຈຳເປັນ, ການໃຫ້ນະໂຍບາຍດ້ານພາສີ-ອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ສິດ, ຜົນປະໂຫຍດ ແລະ ດ້ານອື່ນທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນຈາກລັດ.

ລັດສົ່ງເສີມໃຫ້ລົງທຶນໃສ່ທຸກຂະແໜງການ, ກິດຈະການ ແລະ ທຸກເຂດແຄ້ວນໃນປະເທດເວັ້ນແຕ່ເຂດ ແລະ ກິດຈະການທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນາທຳອັນດີງາມຂອງຊາດ.

### 3.1. ບາງນະໂຍບາຍກ່ຽວກັບການຜະລິດພືດອຸດສາຫະກຳ ຢູ່ ສປປ ລາວ

#### 3.1.1. <u>ຮູບແບບການຜະລິດ 2+3</u>

ຮູບແບບການຜະລິດ 2+3 ໝາຍຄວາມວ່າການມີສ່ວນຮ່ວມລະຫວ່າງປະຊາຊົນ (ເຈົ້າຂອງທີ່ດິນ) ກັບນັກລົງທຶນ. ໃນນັ້ນ, ປະຊາຊົນຈະໄດ້ຮັບຜິດຊອບດ້ານທີ່ດິນ ແລະ ແຮງງານ, ສ່ວນຜູ້ລົງທຶນ ຈະຮັບຜິດຊອບດ້ານທຶນ, ເຕັກນິກວິຊາການ ແລະ ການຕະຫຼາດ. ຫຼັງຈາກນັ້ນຈະແບ່ງຜົນປະໂຫຍດກັນໂດຍອີງໃສ່ຜົນຜະລິດ ຫຼື ກຳໄລເປັນເປີເຊັນເຊິ່ງໃນນັ້ນປະຊາຊົນຈະໄດ້ຮັບສ່ວນແບ່ງແມ່ນຢູ່ໃນລະຫວ່າງ 60 - 65% ແລະ ນັກລົງທຶນໄດ້ຮັບ 35 - 40% ຂອງຜົນຜະລິດທັງໝົດຂຶ້ນກັບການຕົກລົງຂອງສອງຝ່າຍ.

#### 3.1.2. <u>ຮູບແບບການຜະລິດ 1+4</u>

ຮູບແບບການຜະລິດ 1+4 ແມ່ນການກຳນົດໃນການມີສ່ວນຮ່ວມລະຫວ່າງປະຊາຊົນກັບນັກລົງທຶນ ຊຶ່ງມີລັກສະນະຄ້າຍຄືກັນກັບຮູບແບບ 2+3 ແລະ ຈະມີຄວາມແຕກຕ່າງກັນເລັກນ້ອຍຄື: ປະຊາຊົນຈະຮັບຊອບພຽງແຕ່ທີ່ດິນ. ສ່ວນນັກລົງທຶນຈະຮັບຜິດຊອບທາງດ້ານແຮງງານ, ທຶນ, ເຕັກນິກວິຊາການ ແລະ ການຕະຫຼາດ. ການແບ່ງຜົນປະໂຫຍດ ແລະ ຜົນກຳໄລແມ່ນ 30% ເປັນຂອງປະຊາຊົນ ແລະ 70% ເປັນຂອງບໍລິສັດ (ຂັນແກ້ວ ແລະ ຄຳສອນ, 2008).

### 3.2. ຫຼັກການກ່ຽວກັບການສົ່ງເສີມການລົງທຶນ

ການສົ່ງເສີມການລົງທຶນຕ້ອງປະຕິບັດຕາມຫຼັກການດັ່ງນີ້:

- ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕ້ອງຕາມລະບຽບກົດໝາຍ.
- ສົມທົບແໜ້ນກັບການເພີ່ມທະວີຄຸ້ມຄອງຂອງລັດຢ່າງລວມສູນເປັນເອກະພາບໃນທົ່ວປະເທດ.
- ຮັບປະກັນໃຫ້ການລົງທຶນໄດ້ຮັບປະກັນການບໍລິການທີ່ສະດວກ, ວ່ອງໄວ, ໂປ່ງໃສ່, ຍຸດຕິທຳ ແລະ ສະເໝີພາບຕໍ່ກົດໝາຍດ້ວຍການບໍລິການລົງທຶນປະຕູດຽວ.
- ວາງແຜນນະໂຍບາຍສົ່ງເສີມດ້ານຕ່າງໆທີ່ສາມາດດຶງດູດ ແລະ ຍາດແຍງການລົງທຶນ
- ຮັບຮູ້, ຮັບປະກັນການປົກປັກຮັກສາກຳມະສິດ, ສິດ, ຜົນປະໂຫຍດ ແລະ ດ້ານອື່ນທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນຈາກລັດ.
- ຮັບປະກັນການປົກປັກຮັກສາ ແລະ ການພັດທະນາສິ່ງແວດລ້ອມ, ຄວາມສະຫງົບ

ແລະ ຄວາມປອດໄພຂອງສັງຄົມ ແລະ ເຂດການລົງທຶນ (ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ,1998)

## 4. ສະພາບທົ່ວໄປຂອງສະຖານທີ່ສຶກສາ

### 4.1. ສະພາບທົ່ວໄປຂອງເມືອງບຸນເໜືອ

ເມືອງບຸນເໜືອແມ່ນໜຶ່ງໃນຈຳນວນ 7 ເມືອງ ຂອງແຂວງຜົ້ງສາລີ. ເມືອງບຸນເໜືອນີ້ແມ່ນຕັ້ງຢູ່ຫ່າງຈາກເທດສະບານແຂວງອອກໄປທາງທິດຕາເວັນຕົກປະມານ 41 Km ແລະ ນອນຢູ່ໃນເສັ້ນຂະໜານເໜືອທີ Lat: 21˚ 51' 28'' N ຫາ 21˚ 19' 40" N ແລະ ເສັ້ນແວງຕາເວັນອອກທີ 101˚ 25' 15" E ຫາ 101˚ 43' 33" E, ມີຂອບເຂດຊາຍແດນຕິດກັບບັນດາເມືອງຕ່າງໆ ແລະ ປະເທດເພື່ອນບ້ານດັ່ງນີ້:

- ທິດເໜືອຕິດກັບເມືອງຍອດອູ
- ທິດໃຕ້ຕິດກັບເມືອງບຸນໃຕ້
- ທິດຕາເວັນອອກຕິດກັບເມືອງຜົ້ງສາລີ
- ທິດຕາເວັນຕົກຕິດກັບເມືອງຫຼ້າ ສປ ຈີນ.

ທົ່ວເມືອງມີເນື້ອທີ່ທັງໝົດ 109,936 ເຮັກຕາ, ໃນນັ້ນ 73.4% ແມ່ນເປັນເຂດພູດອຍ, ນອກນັ້ນແມ່ນເປັນເຂດທີ່ຮາບພຽງ ຫຼື ມີຄວາມຄ້ອຍຊັນເລັກໜ້ອຍທີ່ກະຈາຍຢູ່ຕາມຮ່ອມພູ ແລະ ແຄມຫ້ວຍນ້ຳ, ເມືອງດັ່ງກ່າວມີເນື້ອທີ່ປ່າໄມ້ປົກຫຸ້ມ 59,624 ເຮັກຕາ, ກວມເອົາ 4.20% ໃນນັ້ນມີເນື້ອທີ່ນາ1,480 ເຮັກຕາ ກ້ວາງເປັນອັນດັບ 2 ຂອງແຂວງຮອງມາຈາກເມືອງຍອດອູ, ນອກນັ້ນແມ່ນເນື້ອທີ່ໄຮ່ຄົງທີ່, ສວນ ແລະ ເນື້ອທີ່ລ້ຽງສັດ. ໃນທົ່ວເມືອງແມ່ນປະກອບດ້ວຍ 66 ບ້ານມີ 3,921 ຄອບຄົວ, ມີພົນລະເມືອງທັງໝົດ 19,187 ຄົນ, ຍິງ 9,401 ຄົນ. ໃນນັ້ນແບ່ງ ອອກເປັນ 7 ກຸ່ມບ້ານພັດທະນາຄື:

- ກຸ່ມງາຍເໜືອ ມີ 9 ບ້ານ ມີເນື້ອທີ່ທັງໝົດ 35,293 ເຮັກຕາ
- ກຸ່ມພຽງຊາຍ ມີ 12 ບ້ານ ມີເນື້ອທີ່ທັງໝົດ 18,491 ເຮັກຕາ
- ກຸ່ມບ້ານໃໝ່ ມີ 8 ບ້ານ ມີເນື້ອທີ່ທັງໝົດ 5,721 ເຮັກຕາ
- ກຸ່ມບຸນເໜືອ ມີ 15 ບ້ານ ມີເນື້ອທີ່ທັງໝົດ 18,567 ເຮັກຕາ
- ກຸ່ມບ້ານຍໍ້ ມີ 6 ບ້ານ ມີເນື້ອທີ່ທັງໝົດ 10,525 ເຮັກຕາ
- ກຸ່ມບໍ່ຂຸນ ມີ 9 ບ້ານ ມີເນື້ອທີ່ທັງໝົດ 8,115 ເຮັກຕາ
- ກຸ່ມດອນຊາຍ ມີ 7 ບ້ານ ມີເນື້ອທີ່ທັງໝົດ 13,225 ເຮັກຕາ

ທົ່ວເມືອງປະກອບມີ 8 ເຜົ່າ ແລະ ມີ 10 ເຜົ່າຍ່ອຍ ທີ່ອາໄສຢູ່ຄື ເຜົ່າອາຄາ (ເຜົ່າຍ່ອຍ: ກໍ່, ເຄີ) ກວມເອົາ40.9%, ເຜົ່າສິງສີລີ (ເຜົ່າຍ່ອຍ: ພູນ້ອຍ, ລາວແຊງ) ກວມເອົາ 37.87%, ເຜົ່າລື້ກວມເອົາ 12.23%, ນອກນັ້ນແມ່ນເຜົ່າກຶມມຸ, ເຜົ່າຢ້າວ, ເຜົ່າໄຕດຳ, ເຜົ່າບິດ ແລະ ເຜົ່າຫໍ້ ເຊິ່ງກວມເອົາ 9% ຂອງຈຳນວນຊົນເຜົ່າທັງໝົດໃນທົ່ວເມືອງ. ການດຳ

ລົງຊີວິດຂອງປະຊາຊົນສ່ວນໃຫຍ່ແມ່ນຍຶດຖືເອົາການກະສິກຳເປັນຕົ້ນຕໍ ນອກນັ້ນແມ່ນຖືອາຊີບຄ້າຂາຍ ແລະ ການໃຫ້ບໍລິການຕ່າງໆ (ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງບຸນເໜືອ, 2010)

### 4.2. ສະພາບທົ່ວໄປຂອງບ້ານສຶກສາ

#### 4.2.1. ສະພາບທົ່ວໄປຂອງບ້ານດົງ

ບ້ານດົງ ແມ່ນບ້ານໜຶ່ງທີ່ມີປະຫວັດຄວາມເປັນມາຂອງການສ້າງບ້ານທີ່ເກົ່າແກ່ພໍສົມຄວນຊຶ່ງໄດ້ແຍກອອກມາຈາກບ້ານກໍແມ່ນເມືອງ ແລະ ແຂວງຜົ້ງສາລີ ມາຕັ້ງຖິ່ນຖານຢູ່ທີ່ນີ້ໃນປີ 1968 ເຊິ່ງເບື້ອງຕົ້ນໄດ້ຍ້າຍມາມີພຽງແຕ່ 30 ຫຼັງຄາເຮືອນ. ໃນໄລຍະນັ້ນແຍກອອກເປັນ 2 ບ້ານຄື ບ້ານດົງໃຕ້ ແລະ ບ້ານດົງເໜືອ. ພໍຕົກມາຮອດປີ 1985 ເພື່ອສະດວກໃນການຄຸ້ມຄອງ ແລະ ເພື່ອຮັດແໜ້ນຄວາມສາມັກຄີໃຫ້ເປັນອັນໜຶ່ງອັນດຽວກັນເລີຍໄດ້ມີການລວມບ້ານເຂົ້າກັນເປັນບ້ານດຽວກັນ ຊຶ່ງເອີ້ນວ່າ: ບ້ານດົງໃນປັດຈຸບັນ.

ບ້ານດົງ ມີທີ່ຕັ້ງຫ່າງຈາກເທດສະບານເມືອງໄປທາງທິດຕາເວັນຕົກປະມານ 12 Km, ມີຂອບເຂດຊາຍແດນຕິດກັບ 4 ບ້ານອ້ອມຂ້າງຄື ທິດເໜືອຕິດກັບບ້ານນ້ອຍ, ທິດໃຕ້ຕິດກັບບ້ານຫົ່ມ, ທິດຕາເວັນອອກຕິດກັບບ້ານເດັ່ນກິລາ ແລະ ທິດຕາເວັນຕົກຕິດກັບບ້ານຜາໄຊ ຊຶ່ງປັດຈຸບັນແມ່ນມີຈຳນວນ 50 ຫຼັງຄາເຮືອນ, ປະກອບດ້ວຍ 58 ຄອບຄົວ. ໃນນັ້ນມີພົນລະເມືອງທັງໝົດ 236 ຄົນ, ຍິງ 128 ຄົນ ປະກອບດ້ວຍເຜົ່າດຽວຄື ເຜົ່າພູນ້ອຍ. ທົ່ວບ້ານມີເນື້ອທີ່ທັງໝົດ1,816.19 ເຮັກຕາ, ໃນນັ້ນປະກອບມີເນື້ອທີ່ປ່າສະຫງວນ 224 ເຮັກຕາ, ປ່າປ້ອງກັນ 518 ເຮັກຕາ, ປ່າຟື້ນຟູ 229 ເຮັກຕາ, ປ່າຊົມໃຊ້ 605 ເຮັກຕາ, ເຂດທຳການຜະລິດ 168 ເຮັກຕາ, ນາ 23 ເຮັກຕາ, ເນື້ອທີ່ລ້ຽງສັດ 72 ເຮັກຕາ, ເນື້ອທີ່ປຸກ ສ້າງ 3.5 ເຮັກຕາ ແລະ ເນື້ອທີ່ອື່ນໆ 0.6 ເຮັກຕາ. ປະຊາຊົນສ່ວນໃຫ້ຍ່ແມ່ນຍຶດຖືອາຊີບກະສິກຳເປັນຫຼັກ ຊຶ່ງປະກອບດ້ວຍການປູກຝັງ-ລ້ຽງສັດ ອາດເວົ້າໄດ້ວ່າການຜະລິດດັ່ງກ່າວແມ່ນສາມາດຕອບສະໜອງລາຍຮັບໃຫ້ແກ່ປະຊາຊົນຢ່າງຫຼວງຫຼາຍ ແມ່ນການປູກພືດເປັນສິນຄ້າຂາຍໃຫ້ແກ່ບໍລິສັດ ໂດຍການເຮັດສັນຍາ ຊຶ່ງພືດທີ່ປູກເປັນສິນຄ້າແມ່ນປະກອບມີ ອ້ອຍ, ມັນຝຣັ່ງ, ໝາກນອດ, ເປັນຕົ້ນ.

#### 4.2.2. ສະພາບທົ່ວໄປຂອງບ້ານຫ້ວຍດົງ

ບ້ານຫ້ວຍດົງກໍ່ແມ່ນອີກບ້ານໜຶ່ງ ທີ່ໄດ້ມີການຍົກຍ້າຍອອກມາຈາກບ້ານຖະແຫຼງ ເມືອງ ແລະ ແຂວງຜົ້ງສາລີ. ມາຕັ້ງຖິ່ນຖານຢູ່ທີ່ນີ້ໃນປີ 1968 ເພື່ອລົງສູ່ທົ່ງພຽງຊຶ່ງທຳອິດຍ້າຍມາມີພຽງແຕ່ 5 ຫຼັງຄາເຮືອນ. ບ້ານຫ້ວຍດົງແມ່ນເປັນບ້ານໜຶ່ງທີ່ຕັ້ງຫ່າງຈາກເທດສະບານເມືອງໄປທາງທິດເໜືອປະມານ 2.5 Km. ມີຂອບເຂດຊາຍແດນຕິດກັບບ້ານອ້ອມຂ້າງຄື ທິດເໜືອຕິດກັບບ້ານນ້ຳຍຸ້ງ, ທິດໃຕ້ຕິດກັບເມືອງຜົ້ງສາລີ, ທິດຕາເວັນອອກຕິດກັບສາຍພູຖະແຫຼງ ແລະ ທິດຕາເວັນຕົກຕິດກັບບ້ານເດັ່ນກິລາ ຊຶ່ງປັດຈຸບັນນີ້ແມ່ນມີຈຳນວນທັງໝົດເພີ່ມຂຶ້ນເປັນ 64 ຫຼັງຄາເຮືອນ, ປະກອບດ້ວຍ 72 ຄອບຄົວ. ໃນນັ້ນມີພົນລະເມືອງທັງໝົດ 229 ຄົນ, ຍິງ 146 ຄົນ ປະກອບດ້ວຍ 3 ຊົນເຜົ່າຄື ຊົນເຜົ່າພູນ້ອຍຈຳນວນ 61 ຫຼັງຄາເຮືອນ

ກວມເອົາ 95.31%, ຊົນເຜົ່າກຶມມຸຈຳນວນ 2 ຫຼັງຄາເຮືອນກວມເອົາ 3.13% ແລະ ຊົນເຜົ່າອາຄາ 1 ຫຼັງຄາເຮືອນກວມເອົາ 1.56%. ທົ່ວບ້ານມີເນື້ອທີ່ທັງໝົດ 2,049.984 ເຮັກຕາ ໃນນັ້ນປະກອບມີເນື້ອທີ່ປ່າສະຫງວນ 1,25 ເຮັກຕາ, ປ່າປ້ອງກັນ 383 ເຮັກຕາ, ປ່າຊົມໃຊ້ 349 ເຮັກຕາ, ເຂດທຳການຜະລິດ18.89 ເຮັກຕາ, ນາ 45.19 ເຮັກຕາ, ເນື້ອທີ່ປຸກສ້າງ 1.5 ເຮັກຕາ ແລະ ເນື້ອທີ່ອື່ນໆອີກ 6 ເຮັກຕາ.

4.2.3. ສະພາບທົ່ວໄປຂອງບ້ານຜາປູນເກົ່າ

ບ້ານຜາປູນເກົ່າແມ່ນເປັນບ້ານໜຶ່ງຂອງເມືອງບຸນເໜືອ ຊຶ່ງຕັ້ງຫ່າງຈາກເທດສະບານເມືອງໄປທາງທິດໃຕ້ປະມານ 11 Km. ມີຂອບເຂດຊາຍແດນຕິດກັບ 4 ບ້ານອ້ອມຂ້າງຄື: ທິດເໜືອຕິດກັບບ້ານບໍ່ໃໝ່, ທິດໃຕ້ຕິດກັບທິດຕາເວັນອອກຕິດກັບບ້ານແສນທຳ ແລະ ທິດຕາເວັນຕົກຕິດກັບເມືອງຫຼ້າ ສປ ຈີນ ຊຶ່ງປັດຈຸບັນແມ່ນມີ 69 ຫຼັງຄາເຮືອນ, ປະກອບດ້ວຍ 91 ຄອບຄົວ, ໃນນັ້ນມີພົນລະເມືອງທັງໝົດ 402 ຄົນ, ຍິງ 192 ຄົນ ປະກອບດ້ວຍເຜົ່າດຽວຄືເຜົ່າອາຄາ, ທົ່ວບ້ານມີເນື້ອທີ່ທັງໝົດ 836.1 ເຮັກຕາ ໃນນັ້ນປະກອບມີເນື້ອທີ່ປ່າສະຫງວນ 64 ເຮັກຕາ, ປ່າປ້ອງກັນ 125 ເຮັກຕາ, ປ່າຟື້ນຟູ 30 ເຮັກຕາ, ປ່າຊົມໃຊ້ 135 ເຮັກຕາ, ເຂດທຳການຜະລິດ 54.8 ເຮັກຕາ, ນາ 12.5 ເຮັກຕາ, ເນື້ອທີ່ປຸກສ້າງ 4 ເຮັກຕາ ແລະ ເນື້ອທີ່ອື່ນໆ 264.2 ເຮັກຕາ. ປະຊາຊົນສ່ວນໃຫຍ່ແມ່ນຍຶດຖືອາຊີບກະສິກຳເປັນຫຼັກ ຊຶ່ງປະກອບດ້ວຍການປູກຝັງ-ລ້ຽງສັດທີ່ອາດເວົ້າໄດ້ວ່າການຜະລິດດັ່ງກ່າວ ແມ່ນອາດສາມາດຕອບສະໜອງທາງດ້ານສະບຽງອາຫານໃນແຕ່ລະວັນ, ແຕ່ສິ່ງທີ່ໂດດເດັ່ນກ່ວາໝູ່ໃນປັດຈຸບັນ ແລະ ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນຢ່າງຫຼວງຫຼາຍ ແມ່ນການປູກອ້ອຍເປັນສິນຄ້າໃຫ້ແກ່ບໍລິສັດໂດຍການເຮັດສັນຍາ ຊຶ່ງບ້ານຜາປູນເກົ່ານີ້ແມ່ນມີເນື້ອທີ່ປູກອ້ອຍກ້ວາງຂວາງຫຼາຍກ່ວາໝູ່ເປັນອັນດັບໜຶ່ງໃນທົ່ວເມືອງ ຊຶ່ງມີເນື້ອທີ່ປູກອ້ອຍເຖິງ 146.6 ເຮັກຕາ.

4.2.4. <u>ສະພາບທົ່ວໄປຂອງບ້ານພຽງດອກຄຳ</u>

ບ້ານພຽງດອກຄຳ ແມ່ນບ້ານໜຶ່ງທີ່ມີມູນເຊື້ອການຜະລິດ ແລະ ມີການເຮັດການຜະລິດແບບມີສັນຍາຜູກພັນທີ່ດົນນານພໍສົມຄວນ, ການຍົກຍ້າຍຖິ່ນຖານຂອງບ້ານໃນເມື່ອກ່ອນແມ່ນໄດ້ມີການຍົກຍ້າຍມາຈາກບ້ານແສງຄ້ອງ ເມືອງ ແລະ ແຂວງຜົ້ງສາລີ. ມາຕັ້ງຖິ່ນຖານຢູ່ທີ່ນີ້ໃນປີ 1968 ຊຶ່ງ ເບື້ອງຕົ້ນແມ່ນຍົກຍ້າຍມາພຽງແຕ່ 7 ຄອບຄົວເທົ່ານັ້ນ.

ບ້ານພຽງດອກຄຳນີ້ ແມ່ນຕັ້ງຫ່າງຈາກເທດສະບານເມືອງໄປທາງທິດໃຕ້ປະມານ 2 Km. ມີຂອບເຂດຊາຍແດນຕິດກັບ 4 ບ້ານອ້ອມຂ້າງຄື ທິດເໜືອຕິດກັບບ້ານບຸນເໜືອ, ທິດໃຕ້ຕິດກັບບ້ານນາແລ, ທິດຕາເວັນອອກຕິດກັບບ້ານກອງ ແລະ ທິດຕາເວັນຕົກຕິດກັບບ້ານນ້ຳຍ່ອງ ຊຶ່ງປັດຈຸບັນແມ່ນມີ 127 ຫຼັງຄາເຮືອນ, ປະກອບດ້ວຍ 145 ຄອບຄົວ. ໃນນັ້ນມີພົນລະເມືອງທັງໝົດ 555 ຄົນ, ຍິງ 279 ຄົນ ປະກອບດ້ວຍ 5 ຊົນເຜົ່າ: ເຜົ່າພູນ້ອຍຈຳນວນ 77 ຄອບຄົວກວມເອົາ 60.63%, ຊົນເຜົ່າອາຄາຈຳນວນ 30 ຄອບຄົວກວມເອົາ 23.62%, ຊົນເຜົ່າກຶມມຸຈຳນວນ 15 ຄອບຄົວກວມເອົາ 11.8%, ຊົນເຜົ່າຫໍ້ຈຳນວນ 3 ຄອບຄົວກວມເອົາ 2,37% ແລະ ຊົນເຜົ່າລາວລຸ່ມຈຳນວນ 2 ຄອບຄົວກວມເອົາ 1.58%. ທົ່ວບ້ານມີເນື້ອທີ່ທັງ

ໝົດ 168.5 ເຮັກຕາ ໃນນັ້ນປະກອບມີເນື້ອທີ່ປ່າສະຫງວນ 2 ເຮັກຕາ, ປ່າປ້ອງກັນ 15 ເຮັກຕາ, ປ່າຊົມໃຊ້ 4.5 ເຮັກຕາ, ເຂດທຳການຜະລິດ 143 ເຮັກຕາ, ໃນນັ້ນ ມີເນື້ອທີ່ດິນນາ 42 ເຮັກຕາ, ເນື້ອທີ່ສວນ 101 ເຮັກຕາ, ເນື້ອທີ່ປຸກສ້າງ 4 ເຮັກຕາ, ການດຳລົງຊີວິດຂອງປະຊາຊົນ ໃນຂົງເຂດບ້ານນີ້ແມ່ນມີຄວາມຫຼາກຫຼາຍທາງດ້ານອາຊີບຕ່າງໆບໍ່ວ່າຈະເປັນທາງດ້ານກະສິກຳ, ຫັດຖະກຳ, ການຄ້າຂາຍ ແລະ ອື່ນໆ ແຕ່ສິ່ງທີ່ໂດດເດັ່ນ ແລະ ເປັນຂະບວນການຟົດຟື້ນກ່ວາໝູ່ໃນປັດຈຸບັນ ແລະ ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນຢ່າງຫຼວງຫຼາຍແມ່ນການປູກພືດກະສິກຳເປັນສິນຄ້າໃຫ້ແກ່ບໍລິສັດ ໂດຍການເຮັດສັນຍາຊຶ່ງພືດທີ່ປູກເປັນສິນຄ້າແມ່ນປະກອບມີ: ອ້ອຍ, ໝາກນອດເປັນຕົ້ນ

# ອຸປະກອນ ແລະ ວິທີການ

## 1. ວິທີການ

### 1.1. ສະຖານທີ່ຂອງການສຶກສາ

ໃນການສຶກສາຄັ້ງນີ້ ແມ່ນໄດ້ລົງເກັບກຳຂໍ້ມູນຕົວຈິງຢູ່ເມືອງບຸນເໜືອ ແຂວງ ຜົ້ງສາລີ. ຊຶ່ງໄດ້ກຳນົດເອົາ 4 ບ້ານ ທີ່ເປັນບ້ານເປົ້າໝາຍຂອງການສຶກສາຄື ບ້ານດົງ, ບ້ານຫ້ວຍດົງ, ບ້ານຜາປູນເກົ່າ ແລະ ບ້ານພຽງດອກຄຳ.

### 1.2. ໄລຍະເວລາຂອງການສຶກສາ

ການລົງສຶກສາຄັ້ງນີ້ ແມ່ນໃຊ້ເວລາທັງໝົດ 5 ເດືອນ (ເລີ່ມແຕ່ວັນທີ່ 8 ກຸມພາ 2012 ເຖິງ ວັນທີ່ 8 ມິຖຸນາ 2012) ໂດຍແບ່ງອອກເປັນ 3 ໄລຍະຄື

- ໄລຍະທີ່ 1: ການສຶກສາຂໍ້ມູນເບື້ອງຕົ້ນ, ເລີ່ມແຕ່ວັນທີ 8 ກຸມພາ 2012 - 16 ມີນາ 2012
- ໄລຍະທີ່ 2: ລົງເກັບກຳຂໍ້ມູນຕົວຈິງຢູ່ພາກສະໜາມ, ເລີ່ມແຕ່ວັນທີ 17 ມີນາ 2012 - 10 ເມສາ 2012
- ໄລຍະທີ່ 3: ການວິເຄາະຂໍ້ມູນ ແລະ ຂຽນບົດລາຍງານທ້າຍການສຶກສາ ພ້ອມທັງສະເໜີຜົນຂອງການສຶກສາ, ເລີ່ມແຕ່ວັນທີ 17 ເມສາ 2012 - 8 ມິຖຸນາ 2012

### 1.3. ວິທີການເກັບກຳຂໍ້ມູນ

1.3.1. <u>ຂໍ້ມູນມືສອງ</u>

ຂໍ້ມູນມືສອງແມ່ນໄດ້ຈາກຄົ້ນຄ້ວາເອກະສານ ແລະ ບົດລາຍງານທ້າຍການສຶກສາ, ບົດສະຫຼຸບປະຈຳປີເຊັ່ນ ຂໍ້ມູນຈາກຫໍສະໝຸດຄະນະກະເສດສາດ, ຂໍ້ມູນຈາກໂຄງການສົ່ງເສີມກະສິກຳ, ຂໍ້ມູນຈາກຫ້ອງການກະສິກຳ ແລະ ປ່າໄມ້ ເມືອງບຸນເໜືອ ແລະ ຂໍ້ມູນຂ່າວສານທາງອິນເຕີເນັດ.

1.3.2. <u>ຂໍ້ມູນມືໜຶ່ງ</u>

ໃນການເກັບກຳຂໍ້ມູນ ແມ່ນໃຊ້ແບບຟອມສຳພາດເພື່ອສຳພາດກຸ່ມປະຊາກອນຕົວຢ່າງໂດຍກົງເປັນລາຍບຸກຄົນ ຊຶ່ງໃນການສຳພາດລາຍລະອຽດມີດັ່ງນີ້:

- ຄັດເລືອກເອົາຊາວກະສິກອນ 10 ຄອບຄົວ/ບ້ານ ຊຶ່ງແມ່ນຄອບຄົວທີ່ເຮັດການຜະລິດພືດເປັນສິນຄ້າ 4 ຊະນິດຄື ອ້ອຍ, ຊາ, ມັນຝຣັ່ງ ແລະ ໝາກນອດ, ການສຳພາດເອົາ

ຂໍ້ມູນກ່ຽວກັບບັນຫາ ແລະ ວິທີແກ້ໄຂບັນຫາຂອງການຜະລິດພືດພາຍໃຕ້ສັນຍາ.

- ບໍລິສັດຄັດເລືອກເອົາ 4 ບໍລິສັດ ແມ່ນບໍລິສັດທີ່ເຮັດທຸລະກິດກ່ຽວກັບການສົ່ງເສີມການປູກພືດເປັນສິນຄ້າທີ່ມີສັນຍາກັບຊາວກະສິກອນ, ການສຳພາດເອົາຂໍ້ມູນແມ່ນກ່ຽວກັບບັນຫາ ແລະ ວິທີແກ້ໄຂບັນຫາຂອງການຜະລິດພືດພາຍໃຕ້ສັນຍາ.

- ພະນັກງານກະສິກຳ ແລະ ປ່າໄມ້ເມືອງ ສຳພາດເອົາຂໍ້ມູນກ່ຽວກັບບັນຫາຂອງການຜະລິດ ແລະ ວິທີແກ້ໄຂບັນຫາຂອງການຜະລິດພືດພາຍໃຕ້ສັນຍາ.

### 1.4. ການວິເຄາະຂໍ້ມູນ

ໃນການວິເຄາະຂໍ້ມູນຈາກການສຶກສາກ່ຽວບັນຫາຂອງການຜະລິດ ແລະ ວິທີແກ້ໄຂບັນຫາຂອງການຜະລິດພືດພາຍໃຕ້ສັນຍາທາງດ້ານຄຸນນະພາບ ໂດຍການອ່ານສຶກສາແລ້ວແປຄວາມໝາຍ ແລະ ພັນລະນາ ແລະ ການວິເຄາະຂໍ້ມູນແມ່ນໃຊ້ໂປຣແກມ Excel ຄິດໄລ່ແລ້ວຕີຄວາມໝາຍ.

# ຜົນໄດ້ຮັບ

## 1. ສະພາບການຜະລິດຂອງເຂດສຶກສາ

ສະພາບການຜະລິດກະສິກຳຂອງເມືອງບຸນເໜືອເມື່ອກ່ອນ ຊາວກະສິກອນໄດ້ຍຶດຖືເອົາການຜະລິດເຂົ້າເປັນຫຼັກເພື່ອສະໜອງແກ່ການບໍລິໂພກພາຍໃນຄອບຄົວເທົ່ານັ້ນ. ນອກຈາກການຜະລິດຂົ້າແລ້ວເຂົາເຈົ້າຍັງໄດ້ປູກພືດຜັກຕ່າງໆເພື່ອບໍລິໂພກ ແລະ ເປັນສິນຄ້າບາງຈຳນວນເຊັ່ນ ສາລີ, ໝາກເດືອຍ ແລະ ອື່ນໆ ໃນໄລຍະນີ້ການຜະລິດຍັງບໍ່ທັນໄດ້ຫັນການຜະລິດເພື່ອເປັນສິນຄ້າເທົ່າທີ່ຄວນ. ມາຮອດປີ 1997 ບັນດາບໍລິສັດຕ່າງໆ ໄດ້ເລີ່ມເຂົ້າມາລົງທຶນເພື່ອສົ່ງເສີມການປູກພືດເປັນສິນຄ້າມີທັງບໍລິສັດທີ່ເປັນການລົງທຶນຂອງຄົນລາວໂດຍກົງ, ບໍລິສັດທີ່ຮ່ວມທຶນລະຫວ່າງລາວກັບຈີນ ແລະ ບໍລິສັດທີ່ເປັນການລົງທຶນຂອງຄົນຈີນໂດຍກົງ ຊຶ່ງແຕ່ລະບັນດາບໍລິສັດມີດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 1.** ບັນດາບໍລິສັດທີ່ເຂົ້າມາລົງທຶນເຮັດການສົ່ງເສີມການປູກພືດເປັນສິນຄ້າຂອງເມືອງບຸນເໜືອ.

| ລ/ດ | ຊື່ບໍລິສັດ | ການລົງທຶນ | ກິດຈະກຳການເຄືອນໄຫວ |
|---|---|---|---|
| 1 | ໂຮງງານນ້ຳຕານຈິງຢຸນເມືອງຫຼ້າ ແຂວງຢຸນນານ ສປ ຈີນຈຳກັດ (ປະເທດຈີນ) | ຈີນ | ສົ່ງເສີມການປູກ ແລະ ເກັບຊື້ອ້ອຍລຳ |
| 2 | ບໍລິສັດກົງຟູລິນຊາງ | ຈີນ | ສົ່ງເສີມການປູກ ແລະ ເກັບຊື້ຊາ |
| 3 | ບໍລິສັດຈັນທະພົມສົ່ງເສີມການປູກພືດ ແລະ ເກັບເຄື່ອງປ່າຂອງດົງ | ລາວ | ສົ່ງເສີມການປູກພືດລະດູແລ້ງ |
| 4 | ບໍລິສັດສົ່ງເສີມການປູກພືດກະສິກຳ ແລະ ເກັບຊື້ເຄື່ອງປ່າຂອງດົງເປັນສິນຄ້າຂາອອກ-ຂາເຂົ້າຫຸ້ນສ່ວນຈຳກັດ | ຫຸ້ນສ່ວນ ລາວ- ຈີນ | ສົ່ງເສີມການປູກພືດລະດູແລ້ງ |
| 5 | ບໍລິສັດຊາງເຊັ້ງຕາປູກກາເຟ | ຈີນ | ສົ່ງເສີມປູກ ແລະ ເກັບຊື້ກາເຟ |
| 6 | ບໍລິສັດໄປໂກເຈືອາຫານທຳມະຊາດຈຳກັດ | ຈີນ | ສົ່ງເສີມການປູກ ແລະ ເກັບຊື້ໝາກນອດ |
| 7 | ບໍລິສັດຊີຊຸ້ຍຍິງອີ້ | ຈີນ | ປູກຢາງພາລາ |
| 8 | ບໍລິສັດຄິງຢາງ | ຈີນ | ປູກໝາກມັນໂລ |

<u>**ແຫຼ່ງທີ່ມາ:**</u> ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງບຸນເໜືອ ແຂວງຜົ້ງສາລີ ປີ 2011.

ຈາກການສຳພາດ 4 ບໍລິສັດຄື ໂຮງງານນ້ຳຕານຈິງຢຸນເມືອງຫຼ້າແຂວງຢຸນນານ ສປ ຈີນ ຈຳກັດ, ບໍລິສັດກິງຟູລິນຊາງ, ບໍລິສັດຈັນທະພິມສົ່ງເສີມການປູກພືດ ແລະ ເກັບເຄື່ອງປ່າຂອງດົງ ແລະ ບໍລິສັດສົ່ງເສີມການປູກພືດກະສິກຳ ແລະ ເກັບຊື້ເຄື່ອງປ່າຂອງດົງເປັນສິນຄ້າຂາອອກ-ຂາເຂົ້າຫຸ້ນສ່ວນຈຳກັດ. ບັນດາບໍລິສັດເຫຼົ່ານັ້ນໄດ້ສົ່ງເສີມການປູກພືດເປັນສິນຄ້າເຊັ່ນ ອ້ອຍ, ມັນຝຣັ່ງ, ໝາກນອດ, ຊາ ແລະ ພືດອື່ນໆ ຊຶ່ງບັນດາພືດເຫຼົ່ານີ້ເປັນພືດຫຼັກທີ່ບໍລິສັດໄດ້ມີການເຮັດສັນຍາກັບຊາວກະສິກອນທີ່ມີການລົງທຶນໃນຮູບແບບ 2+3 ໂດຍເນື້ອໃນສັນຍາແມ່ນປະຊາຊົນປະກອບສ່ວນທາງດ້ານທີ່ດິນ (ພາສີທີ່ດິນ ແລະ ຄ່າທຳນຽມການທັນປ່ຽນເປົ້າໝາຍການນຳໃຊ້ທີ່ດິນ) ແລະ ແຮງງານເຂົ້າໃນການຜະລິດ. ສ່ວນບໍລິສັດແມ່ນປະກອບສ່ວນທາງດ້ານທຶນຮອນ, ເຕັກນິກການຜະລິດ ແລະ ການຕະຫຼາດ. ໃນການສະໜອງທຶນຮອນຂອງບໍລິສັດນັ້ນແມ່ນປະກອບດ້ວຍອຸປະກອນການຜະລິດ, ປຸ໋ຍເຄມີ, ແນວພັນ, ຢາປາບແມງໄມ້ ແລະ ວັດສະພືດບໍລິສັດໄດ້ສະໜອງໃຫ້ລ້າຄື ບໍລິສັດສົ່ງເສີມການປູກມັນຝຣັ່ງ, ໝາກນອດ ແລະ ຊາ ແລະ ບາງບໍລິສັດກໍ່ໄດ້ສະໜອງໃນຮູບແບບສິນເຊື່ອເມື່ອເຖິງລະດູການເກັບກ່ຽວຈຶ່ງໃຊ້ແທນຄືນ ໂດຍບໍ່ມີດອກເບ້ຍໄດ້ແກ່ບໍລິສັດສົ່ງເສີມການປູກໝາກນອດ.

### 1.1. ການປູກອ້ອຍ

ການສົ່ງເສີມການປູກອ້ອຍແມ່ນເປັນການລົງທຶນຂອງບໍລິສັດນ້ຳຕານຈິງຢຸນ ເມືອງຫຼ້າແຂວງຢຸນນານ ສປ ຈີນຈຳກັດ ຊຶ່ງບໍລິສັດໄດ້ເຂົ້າມາລົງທຶນຕັ້ງແຕ່ປີ 1997 ມີສັນຍາກັບຊາວກະສິກອນຄື ໃນຮູບແບບ 2+3 ຊຶ່ງຊາວກະສິກອນຕ້ອງປະກອບສ່ວນທີ່ດິນ ແລະ ແຮງງານ. ສ່ວນຜູ້ລົງທຶນ (ບໍລິສັດ) ແມ່ນສະໜອງສິ່ງນຳເຂົ້າ (ອຸປະກອນການຜະລິດ, ຢາປາບແມງໄມ້ ແລະ ວັດສະພືດ, ແນວພັນ, ປຸ໋ຍເຄມີ), ເຕັກນິກວິຊາການ ແລະ ຕະຫຼາດ. ໃນການສະໜອງສິ່ງນຳເຂົ້າແມ່ນບໍລິສັດສະໜອງໃຫ້ແກ່ຊາວກະສິກອນ ໂດຍບໍ່ຄິດດອກເບ້ຍພຽງແຕ່ໃຊ້ແທນຄືນເມື່ອເຖິງລະດູການເກັບກ່ຽວຂາຍຜົນຜະລິດ, ເຕັກນິກແມ່ນບໍລິສັດໄດ້ເອົາວິຊາການມາສອນໃຫ້ແກ່ຊາວກະສິກອນ ແລະ ຕະຫຼາດແມ່ນບໍລິສັດໄດ້ເກັບຊື້ໂດຍກົງເປັນຜົນຜະລິດປະເພດອ້ອຍລຳ. ໃນການປູກອ້ອຍມີເຕັກການປູກທີ່ຂຸດເປັນແລວກັນເຈື່ອນຕາມແນວລະດັບ ໂດຍໃຊ້ປຸ໋ຍເຄມີຮອງພື້ນ ແລະ ໃຊ້ເລັ່ງການຈະເລີນເຕີບໂຕ (ປຸ໋ຍສູດ 15-15-15 ຂອງຈີນ) ຊຶ່ງໃນການນຳໃຊ້ແມ່ນໃນອັດຕາ 15 ເປົາ/ເຮັກຕາ, ໃຊ້ສານເຄມີໃນການຄວບຄຸມແມງໄມ້, ພະຍາດພືດ ແລະ ວັດສະພືດ. ໄລຍະເວລາຂອງການປູກອ້ອຍແມ່ນມີອາຍຸໂດຍສະເລ່ຍ 4 ປີ (4 ຕໍ) ຊຶ່ງປີທຳອິດແມ່ນໃຊ້ແນວພັນທີ່ເປັນລຳອ້ອຍໃນການປູກ ຊຶ່ງລະດູການປູກແມ່ນເລີ່ມແຕ່ເດືອນມີນາ-ພຶດສະພາເມື່ອຮອດຊ່ວງເດືອນທັນວາ-ເມສາແມ່ນລະດູການເກັບກ່ຽວ ຊ່ວງໄລຍະນີ້ບໍລິສັດໄດ້ມາເກັບຊື້ຈາກຊາວກະສິກອນ.

ເມື່ອເກັບກ່ຽວຜົນຜະລິດອ້ອຍແລ້ວເຂົາເຈົ້າໄດ້ຖາງ ແລະ ຈູດເພື່ອໃນລະດູການປູກຕໍ່ໄປໃຫ້ໜໍ່ອ້ອຍແຕກຂຶ້ນໃໝ່ ຊຶ່ງປະຕິບັດແບບນີ້ຈົນຊົ່ວອາຍຸການປູກອ້ອຍ.

ຈາກການສຳພາດຊາວກະສິກອນໄດ້ເວົ້າວ່າ ໃນການປູກອ້ອຍດັ່ງກ່າວນັ້ນໄລຍະປູກທຳອິດປີ 2009 ແມ່ນເຫັນວ່າໄດ້ຜົນຜະລິດດີ, ແຕ່ມາຮອດໄລຍະປີທີ່ສອງ ແລະ ປີທີ່ສາມ (2010-2011) ຜົນຜະລິດໄດ້ຫຼຸດລົງດັ່ງເສັ້ນສະແດງລຸ່ມນີ້:




**ຮູບ 1.** ເສັ້ນສະແດງຜະລິດຕະພາບຂອງການຜະລິດອ້ອຍຂອງຊາວກະສິກອນ

ຈາກເສັ້ນສະແດງເຫັນວ່າ ຜະລິດຕະພາບສະເລ່ຍຂອງຜົນຜະລິດອ້ອຍໃນປີ 2009, 2010 ແລະ 2011 ມີລັກສະນະຫຼຸດລົງເມື່ອທຽບກັບໄລຍະປີທຳອິດ (ປີ 2009). ຜະລິດຕະພາບຂອງຜົນຜະລິອ້ອຍລຸດລົງດັ່ງກ່າວ, ເນື່ອງຈາກການປູກພືດຊະນິດດຽວເປັນໄລຍາວ ແລະ ຂາດການປັບປຸງດິນຢ່າງຖືກວິທີ (ໃຊ້ປຸ໋ຍເຄມີເຄມີເຄມີໃນການປັບປຸງດິນ) ຈຶ່ງເຮັດໃຫ້ຜະລິດຕະພາບຂອງອ້ອຍຕົກຕໍ່າ.



**ຮູບ 2**. ເຕັກນິກການປູກອ້ອຍພາຍໃຕ້ສັນຍາຂອງປະຊາຊົນໃນເຂດເນີນສູງ

### 1.2. ການປູກມັນຝຣັ່ງ

ການປູກມັນຝຣັ່ງ ແມ່ນເປັນການລົງທຶນຂອງບໍລິສັດສົ່ງເສີມການປູກພືດເປັນສິນຄ້າຂາອອກ-ຂາເຂົ້າຫຸ້ນສ່ວນຈຳກັດ ຊຶ່ງບໍລິສັດໄດ້ເຂົ້າມາລົງທຶນແຕ່ປີ 2009 ມີສັນຍາກັບຊາວກະສິກອນຄື ໃນຮູບແບບ 2+3 ຊຶ່ງຊາວກະສິກອນຕ້ອງປະກອບສ່ວນທີ່ດິນ ແລະ ແຮງງານ. ສ່ວນຜູ້ລົງທຶນ (ບໍລິສັດ) ແມ່ນສະໜອງສິ່ງນຳເຂົ້າ (ອຸປະກອນການຜະລິດ, ຢາປາບແມງໄມ້ ແລະ ວັດສະພືດ, ແນວພັນ, ປຸ໋ຍເຄມີ), ເຕັກນິກວິຊາການ ແລະ ຕະຫຼາດ. ໃນການສະໜອງສິ່ງນຳເຂົ້າແມ່ນບໍລິສັດສະໜອງໃຫ້ແກ່ຊາວກະສິກອນໂດຍບໍ່ໃຫ້ເຂົາເຈົ້າໃຊ້ແທນຄືນ, ເຕັກນິກແມ່ນບໍລິສັດໄດ້ເອົາວິຊາການມາສອນໃຫ້ແກ່ຊາວກະສິກອນ ແລະ ຕະຫຼາດແມ່ນບໍລິສັດໄດ້ເກັບຊື້ໂດຍກົງພາຍຫຼັງເກັບກູ້ຜົນຜະລິດ. ໃນການປູກມັນຝຣັ່ງແມ່ນປູກໃນລະດູແລ້ງສະຫຼັບກັບການປູກເຂົ້ານາປີ ຊຶ່ງເອີ້ນວ່າການປູກພືດໝູນວຽນ, ມັນຝຣັ່ງແມ່ນພືດໄລຍະສັ້ນ 6 ເດືອນ. ເຕັກນິກໃນການປູກແມ່ນຂຸດເປັນໜານໃສ່ປຸ໋ຍເຄມີຮອງພື້ນ ແລະ ໃຊ້ເລັ່ງການຈະເລີນເຕີບໂຕ, ໃຊ້ສານເຄມີໃນການຄວບຄຸມແມງໄມ້ ແລະ ພະຍາດພືດ. ໄລຍະເວລາໃນການປູກແມ່ນຫຼັງເກັບກ່ຽວເຂົ້ານາປີຊ່ວງເດືອນທັນວາ ຈາກນັ້ນກໍ່ຈະເກັບກູ້ໃນຊ່ວງຕົ້ນລະດູຝົນຊ່ວງເມສາ-ພຶດສະພາ ໂດຍປະຕິບັດໝູນວຽນໄປໃນຮູບແບບນີ້ແຕ່ລະປີ.

ຈາກການສຳພາດຊາວກະສິກອນຂອງເຂດສຶກສາໄດ້ເວົ້າວ່າ ເຂົາເຈົ້າໄດ້ເລີ່ມປູກແມ່ນປີ 2011 ຊຶ່ງຜະລິດຕະພາບຂອງຜົນຜະລິດທີ່ໄດ້ສະເລ່ຍແມ່ນ 15.25 T/ເຮັກຕາ, ຕ່ຳສຸດແມ່ນ 9 T/ເຮັກຕາ ແລະ ຜົນຜະລິດສູງສຸດແມ່ນ 23 T/ເຮັກຕາ.



**ຮູບ 3.** ການປູກມັນຝຣັ່ງຢູ່ໃນພື້ນທີ່ນາຫຼັງການເກັບກ່ຽວຜະລິດເຂົ້ານາປີ

### 1.3. ການປູກໝາກນອດ

ການປູກໝາກນອດ ແມ່ນເປັນການລົງທຶນຂອງບໍລິສັດໄປໂກເຈີອາຫານທຳມະຊາດ ຊຶ່ງບໍລິສັດເຂົ້າມາລົງທຶນແຕ່ປີ 2008 ມີສັນຍາກັບຊາວກະສິກອນຄື ໃນຮູບແບບ 2+3 ຊາວກະສິກອນຕ້ອງປະກອບສ່ວນທີ່ດິນ ແລະ ແຮງງານ. ສ່ວນຜູ້ລົງທຶນ (ບໍລິສັດ) ແມ່ນສະໜອງສິ່ງນຳເຂົ້າ (ອຸປະກອນການຜະລິດ, ຢາປາບແມງໄມ້ ແລະ ແນວພັນ), ເຕັກນິກວິຊາການ ແລະ ຕະຫຼາດ. ໃນການສະໜອງສິ່ງນຳເຂົ້າແມ່ນບໍລິສັດສະໜອງໃຫ້ແກ່ຊາວກະສິກອນ ໂດຍບໍ່ໃຫ້ເຂົາເຈົ້າໃຊ້ແທນຄືນ, ເຕັກນິກແມ່ນບໍລິສັດໄດ້ເອົາວິຊາການມາສອນໃຫ້ແກ່ຊາວກະສິກອນ ແລະ ຕະຫຼາດແມ່ນບໍລິສັດໄດ້ເກັບຊື້ໂດຍກົງພາຍຫຼັງເກັບກູ້ຜົນຜະລິດ. ໃນການປູກໝາກນອດແມ່ນລະບົບການປູກພືດຊະນິດດຽວ ຊຶ່ງເຕັກນິການປູກແມ່ນຂຸດເປັນຂຸມແລ້ວປູກ ໂດຍບໍ່ມີການນຳໃຊ້ປຸ໋ຍເຄມີ ຫຼື ວັດຖຸອື່ນໆ ໃນການປັບປຸງດິນ, ໃຊ້ສານເຄມີໃນການຄວບຄຸມແມງໄມ້ ແລະ ພະຍາດພືດ. ໃນໄລຍະເວລາຂອງການປູກແມ່ນໃນຊ່ວງເດືອນມີນາ-ເມສາ ແລະ ເກັບກ່ຽວໃນຊ່ວງສິງຫາ-ຕຸລາຂອງແຕ່ລະປີ ຊຶ່ງອາຍຸຂອງການເກັບກ່ຽວແມ່ນມີອາຍຸ 5 ປີ.

ຈາກການສຳພາດຊາວກະສິກອນໄດ້ເວົ້າວ່າ ໃນການປູກໝາກນອດປີທຳອິດໄດ້ຜົນຜະລິດດີ, ແຕ່ປີຕໍ່ມາຜົນຜະລິດໄດ້ຫຼຸດລົງດັ່ງເສັ້ນສະແດງຕໍ່ໄປນີ້:




**ຮູບ 4.** ເສັ້ນສະແດງຜະລິດຕະພາບຂອງການຜະລິດໝາກນອດຂອງຊາວກະສິກອນ

ຈາກເສັ້ນສະແດງເຫັນວ່າ ຜະລິດຕະພາບຂອງຜົນຜະລິດໝາກນອດສະເລ່ຍໄດ້ຫຼຸດລົງໃນແຕ່ລະປີ ຊຶ່ງປີທຳອິດ 2009 ຜະລິດຕະພາບສະເລ່ຍ 15 T/ເຮັກຕາ, ປີ 2010 ໄດ້ 11.3 T/ເຮັກຕາ ແລະ ປີ 2011 ໄດ້ 7 T/ເຮັກຕາ. ຜະລິດຕະພາບຂອງຜົນຜະລິດໝາກນອດຫຼຸດລົງດັ່ງກ່າວນັ້ນ, ເນື່ອງຈາກວ່າການປູກໝາກນອດແມ່ນການປູກພືດຊະນິດດຽວເປັນໄລຍະຍາວໂດຍບໍ່ມີການປັບປຸງດິນ (ປຸ໋ຍເຄມີ ຫຼື ວັດຖຸປັບປຸງດິນ). ດັ່ງນັ້ນ, ສະມັດຕະພາບຂອງຜົນຜະລິດໝາກນອດຈຶ່ງໄດ້ຫຼຸດລົງໃນແຕ່ລະປີ.



**ຮູບ 5.** ເຕັກນິກການປູກໝາກນອດໂດຍໃຊ້ຫຼັວດເຫຼັກເປັນຄ້າງ

### 1.4. ການປູກຊາ

ການປູກຊາແມ່ນການລົງທຶນຂອງບໍລິສັດກົງພູລິນຊາງ ຊຶ່ງບໍລິສັດເຂົ້າມາລົງທຶນແຕ່ປີ 2006 ມີສັນຍາກັບຊາວກະສິກອນຄື ໃນຮູບແບບ 2+3 ຊຶ່ງຊາວກະສິກອນຕ້ອງປະກອບສ່ວນທີ່ດິນ ແລະ ແຮງງານ. ສ່ວນຜູ້ລົງທຶນ (ບໍລິສັດ) ແມ່ນສະໜອງສິ່ງນຳເຂົ້າ (ອຸປະກອນການຜະລິດ, ແນວພັນ, ນ້ຳສະກັດຊີວະພາບ, ປຸ໋ຍ), ເຕັກນິກວິຊາການ ແລະ ຕະຫຼາດ. ໃນການສະໜອງສິ່ງນຳເຂົ້າແມ່ນບໍລິສັດສະໜອງໃຫ້ແກ່ຊາວກະສິກອນ ໂດຍບໍ່ໃຫ້ເຂົາເຈົ້າໃຊ້ແທນຄືນ, ເຕັກນິກແມ່ນບໍລິສັດໄດ້ເອົາວິຊາການມາສອນໃຫ້ແກ່ຊາວກະສິກອນ ແລະ ຕະຫຼາດແມ່ນບໍລິສັດໄດ້ເກັບຊື້ໂດຍກົງພາຍຫຼັງເກັບກ່ຽວຜົນຜະລິດ. ໃນການປູກຊາແມ່ນລະບົບການປູກພືດຊະນິດດຽວເປັນໄລຍະຍາວໃນຮູບແບບການສົ່ງເສີມການປູກຊາຂອງເຂົາເຈົ້າເປັນຮູບແບບກະສິກຳສະອາດ ຫຼື ເອີ້ນວ່າ ກະສິກຳອິນຊີ. ເຕັກນິການປູກແມ່ນຂຸດເປັນຂຸມແລ້ວໃສ່ປຸ໋ຍອິນຊີຮອງພື້ນ (ຝຸ່ນຄອກ) ແລະ ເລັ່ງການຈະເລີນເຕີບໂຕ, ໃຊ້ນ້ຳສະກັດຊີວະພາບໃນການຄວບຄຸມແມງໄມ້ ແລະ ພະຍາດພືດ. ໃນຊ່ວງເວລາປູກແມ່ນຊ່ວງລະດູຝົນເດືອນມິຖຸນາ ແລະ ຈະເກັບກ່ຽວເມື່ອຊາໄດ້ອາຍຸປະມານ 2 ປີ. ຊາເປັນພືດທີ່ໃຫ້ຜົນຜະລິດທາງໃບສາມາດເກັບກ່ຽວໄດ້ຕະຫຼອດປີ ເມື່ອຕົ້ນຊາມີອາຍຸຫຼາຍຂຶ້ນກໍ່ຍິ່ງໃຫ້ຜົນຜະລິດຫຼາຍ.




ຮູບ 6. **ເສັ້ນສະແດງຜະລິດຕະພາບຂອງຜົນຜະລິດຊາ**



**ຮູບ 7.** ສວນຊາຂອງຊາວກະສິກອນທີ່ປູກໃນເຂດພື້ນທີເນີນສູງອາຍຸ 3 ປີ

## 1.5. ການປ່ຽນແປງທາງດ້ານຜົນຜະລິດຂອງຊາວກະສິກອນ

ຈາກການສຳພາດຊາວກະສິກອນໄດ້ເວົ້າວ່າ ພາຍຫຼັງທີ່ຊາວກະສິກອນໄດ້ຫັນມາເຮັດການຜະລິດພາຍໃຕ້ສັນຍາທີ່ມີການປູກພືດ ເພື່ອເປັນສິນຄ້າເຮັດໃຫ້ຄວາມອຸດົມສົມບູນຂອງດິນຫຼຸດລົງ, ແມງໄມ້ ແລະ ພະຍາດພືດລະບາດ ແລ້ວສິ່ງຜົນກະທົບເຮັດໃຫ້ຜະລິດຕະພາບຂອງພືດທີ່ປູກພາຍໃຕ້ສັນຍາຫຼຸດລົງເມື່ອທຽບກັບໄລຍະທຳອິດ, ແຕ່ມີພືດບາງຊະນິດແມ່ນໄດ້ເພີ່ມຂຶ້ນໃນແຕ່ລະປີ ຊຶ່ງສະມັດຕະພາບຂອງການປູກພືດພາຍໃຕ້ສັນຍາມີດັ່ງຮູບລຸ່ມນີ້:




**ຮູບ 8.** ເສັ້ນສະແດງຜະລິດຕະພາບຂອງການຜະລິດພືດ 4 ຊະນິດ (T/ha)




**<u>ແຫຼ່ງຂໍ້ມູນ:</u>** ຫ້ອງການກະສິກຳ - ປ່າໄມ້ເມືອງບຸນເໜືອ ແຂວງຜົ້ງສາລີ ປີ 2009 ແລະ 2010

**ຮູບ 9.** ເສັ້ນສະແດງຜະລິດຕະພາບຂອງການຜະລິດພືດ (T/ເຮັກຕາ) ຂອງເມືອງບຸນເໜືອສົກປີ 2009 - 2010

ຈາກຮູບເສັ້ນສະແດງທີ່ 5 ແລະ 6 ເຫັນວ່າການປູກພືດພາຍໃຕ້ສັນຍາ 4 ຊະນິດດັ່ງກ່າວນັ້ນ, ຜະລິດຕະພາບຂອງຜົນຜະລິດແມ່ນມີລັກສະນະຫຼຸດລົງມີອ້ອຍ ແລະ ໝາກນອດ. ຜະລິດຕະພາບທີ່ມີລັກສະນະເພີ່ມຂຶ້ນໄດ້ແກ່ມັນຝຣັ່ງ ແລະ ຊາ. ຊຶ່ງສາເຫດທີ່ພາໃຫ້ຜະລິດຕະພາບເພີ່ມຂຶ້ນ ແລະ ຫຼຸດລົງຂອງພືດດັ່ງກ່າວນັ້ນມີດັ່ງນີ້:

- ສະມັດຕະພາບຂອງການປູກອ້ອຍຫຼຸດລົງ ຍ້ອນວ່າການປູກອ້ອຍເປັນການປູກພືດຊະນິດດຽວເປັນໄລຍາວ ແລະ ເຕັກນິກຂອງການປູກອ້ອຍຂາດການປັບປຸງດິນຢ່າງຖືກວິທີ (ໃຊ້ປຸ໋ຍເຄມີໃນການປັບປຸງດິນ) ຈຶ່ງເຮັດໃຫ້ຜະລິດຕະພາບຂອງອ້ອຍຫຼຸດລົງ.
- ສະມັດຕະພາບຂອງໝາກນອດຫຼຸດລົງ ຍ້ອນວ່າການປູກໝາກນອດເປັນການປູກພືດຊະນິດດຽວເປັນໄລຍະຍາວ ໂດຍບໍ່ມີການປັບປຸງດິນ (ບໍ່ໃສ່ປຸ໋ຍ ຫຼື ວັດຖຸປັບປຸງດິນ). ດັ່ງນັ້ນ, ສະມັດຕະພາບຂອງຜົນຜະລິດໝາກນອດ ຈຶ່ງເຮັດໃຫ້ຜະລິດຕະພາບຂອງໝາກນອດຫຼຸດລົງ.
- ສະມັດຕະພາບຂອງມັນຝຣັ່ງເພີ່ມຂຶ້ນ ຍ້ອນວ່າການປູກມັນຝຣັ່ງໝູນວຽນສະຫຼັບກັບການປູກເຂົ້ານາ ແລະ ໃຊ້ປຸ໋ຍປັບປຸງດິນ ຈຶ່ງເຮັດໃຫ້ຜະລິດຕະພາບຂອງມັນຝຣັ່ງເພີ່ມຂຶ້ນພຽງເລັກໜ້ອຍ. ແຕ່ໄດ້ສິ່ງຜົນກະທົບເຮັດໃຫ້ຜະລິດຕະພາບຂອງການປູກເຂົ້າຫຼຸດລົງ ຈາກທີ່ເຄີຍໄດ້ຮັບຜົນດີໃນເມື່ອກ່ອນ.

- ສະມັດຕະພາບຂອງຊາເພີ່ມຂຶ້ນ ຍ້ອນວ່າເຕັກນິກການປູກຊາ ແມ່ນຮູບແບບກະສິກຳອິນຊີ ມີການປັບປຸງດິນ ໂດຍໃຊ້ຝຸ່ນອິນຊີ (ຝຸ່ນຄອກ) ແລະ ບໍ່ມີການນຳໃຊ້ສານເຄມີ. ຈຶ່ງເຮັດໃຫ້ສະມັດຕະພາບຂອງຊາເພີ່ມຂຶ້ນ.

## 2. ບັນຫາທີ່ເຮັດໃຫ້ຜົນຜະລິດຕົກຕໍ່າ

ຈາກການສຶກສາບັນຫາທີ່ເຮັດໃຫ້ຜະລິດຕະພາບຂອງການປູກອ້ອຍ ແລະ ໝາກນອດ ຫຼຸດລົງ ຊຶ່ງຊາວກະສິກອນໄດ້ເວົ້າວ່າ:

### 2.1. ບັນຫາທີ່ເຮັດໃຫ້ຜົນຜະລິດອ້ອຍຕົກຕໍ່າ

ບັນຫາທີ່ເຮັດໃຫ້ຜະລິດຕະພາບຂອງການປູກອ້ອຍພາຍໃຕ້ສັນຍາຫຼຸດລົງ ແມ່ນເນື່ອງມາຈາກບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງເມື່ອປູກອ້ອຍໄປປະມານ 3-4 ປີກໍ່ໄດ້ເພີ່ມປະລິມານການໃສ່ປຸ໋ຍຈາກທີ່ເຄີຍໃສ່ 15 ເປົາ/ເຮັກຕາ ເພີ່ມຂຶ້ນມາເປັນ 20 ເປົາ/ເຮັກຕາ, ບັນຫາທາງດ້ານແຮງງານເປັນບັນຫາໜຶ່ງທີ່ສຳຄັນ ໂດຍສະເພາະຊ່ວງລະດູການເກັບກ່ຽວແມ່ນໃຊ້ວັນງານ 55 ວັນງານ/ເຮັກຕາ ຍ້ອນວ່າເຕັກນິກການປູກອ້ອຍຢູ່ເຂດເນີນສູງແມ່ນຕ້ອງໄດ້ໃຊ້ແຮງງານຄົນເປັນຫຼັກບໍ່ສາມາດນຳໃຊ້ເຄື່ອງຈັກເຂົ້າໃນການຜະລິດໄດ້ ແລະ ອີກຢ່າງໜຶ່ງໃນສັນຍາການຜະລິດຂອງບໍລິສັດ ແລະ ຊາວກະສິກອນແຮງງານທີ່ໃຊ້ໃນການປູກນັ້ນແມ່ນເປັນຂອງຊາວກະສິກອນ, ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດລະບາດ ໂດຍສະເພາະເພ້ຍຂາວ ແລະ ບົ້ງດັ່ງຮູບທີ່ 10, ບັນຫາທາງດ້ານສະພາບອາກາດຊຶ່ງຜົ້ງສະລີເປັນເຂດທີ່ມີພູມອາກາດໜາວຈັດ ແລະ ແຫ້ງແລ້ງ ແລະ ບັນຫາທາງດ້ານການບໍ່ເຂົ້າໃຈທາງດ້ານເຕັກນິກການຜະລິດເຮັດໃຫ້ມີການນຳໃຊ້ປຸຍ ແລະ ຢາຂ້າແມງໄມ້ ແລະ ພະຍາດພືດບໍ່ຖືກວິທີ.



ບົ້ງໃນໃບອ້ອຍ



ພະຍາດໃນໃບອ້ອຍ



ເພ້ຍແປ້ງໃນໃບອ້ອຍ

**ຮູບ 10.** ແມງໄມ້ ແລະ ພະຍາດພືດທີ່ເກີດຂຶ້ນກັບອ້ອຍ

### 2.2. ບັນຫາທີ່ເຮັດໃຫ້ຜົນຜະລິດໝາກນອດຕົກຕ່ຳ

ບັນຫາທີ່ເຮັດໃຫ້ຜະລິດຕະພາບຂອງການປູກໝາກນອດພາຍໃຕ້ສັນຍາຫຼຸດລົງ ແມ່ນເນື່ອງມາຈາກບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງ ເມື່ອປູກໝາກນອດໄປປະມານ 2-3 ປີ ການໃຫ້ໝາກແມ່ນເລີ່ມຫຼຸດລົງ ແຕ່ບໍລິສັດກໍ່ບໍ່ໄດ້ສະໜອງປຸ໋ຍເຄມີເຄມີໃຫ້ເພື່ອປັບປຸງດິນ, ບັນຫາທາງດ້ານແມງໄມ້, ພະຍາດພືດ ແລະ ບັນຫາທາງດ້ານສະພາບອາກາດ.

### 2.3. ລະດັບຄວາມສຳຄັນຂອງບັນຫາ

ຈາກການສຳພາດໃຫ້ຊາວກະສິກອນຈັດລຽງບັນຫາ ທີ່ເຮັດໃຫ້ສະມັດຕະພາບຂອງການຜະລິດພືດພາຍໃຕ້ສັນຍາຫຼຸດລົງມີດັ່ງຮູບສະແດງລຸ່ມນີ້:




**ຮູບ 11.** ເສັ້ນສະແດງລະດັບຄວາມສຳຄັນຂອງແຕ່ລະບັນຫາຂອງຊາວກະສິກອນ

ຈາກຮູບເສັ້ນສະແດງເຫັນວ່າ ໃນການຈັດລະດັບຄວາມສຳຄັນຂອງບັນຫາທີ່ເຮັດໃຫ້ຜະລິດຕະພາບຂອງການປູກພືດພາຍໃຕ້ສັນຍາຕົກຕ່ຳ ຈາກການສຳພາດຊາວກະສິກອນໄດ້ເວົ້າວ່າ ບັນຫາທາງຄວາມອຸດົມສົມບູນຂອງດິນຫຼຸດລົງ ແມ່ນບັນຫາທີ່ເປັນບູລິມະສິດອັນດັບໜຶ່ງມີເຖິງ 31%, ຮອງມາແມ່ນບັນຫາທາງດ້ານການຂາດແຮງງານໃນການຜະລິດມີ 30% ແລະ ແມງໄມ້ ແລະ ພະຍາດພືດລະບາດມີ 29%. ບັນຫາທີ່ມີຄວາມສຳຄັນໜ້ອຍໄດ້ແກ່ບັນຫາທາງດ້ານສະພາບຂອງດິນຟ້າອາກາດມີການປ່ຽນແປງ 8% ຊຶ່ງເປັນບັນຫາທີ່ບໍ່ສາມາດຄວບຄຸມໄດ້ ແລະ ບັນຫາທາງດ້ານຄວາມບໍ່ເຂົ້າໃຈເຕັກນິກມີ 2%.

### 2.4. ສາເຫດຂອງບັນຫາທີ່ພາໃຫ້ຜົນຜະລິດຕົກຕ່ຳ

ຈາກສະພາບບັນຫາທີ່ ເຮັດໃຫ້ຜະລິດຕະພາບຂອງການປູກພືດພາຍໃຕ້ສັນຍາຫຼຸດລົງດັ່ງກ່າວນັ້ນແມ່ນມີສາເຫດດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງ 2.** ສາເຫດຂອງບັນຫາທີ່ເຮັດໃຫ້ຜົນຜະລິດຕົກຕ່ຳ

| ບັນຫາ | ສາເຫດ |
|---|---|
| - ຄວາມອຸດົມສົມບູນຂອງດິນຫຼຸດລົງ | - ປູກພືດຊະນິດດຽວເປັນໄລຍະຍາວ<br>- ການປັບປຸງດິນບໍ່ຖືກວິທີ (ນຳໃຊ້ປຸ໋ຍເຄມີໃນການປັບປຸງດິນເປັນສາເຫດເຮັດໃຫ້ອິນຊີວັດຖຸໃນດິນຫຼຸດລົງ ແລະ ຍັງຫຼຸດຈຳນວນຈຸລິນຊີໃນດິນອີກດ້ວຍ)<br>- ໃຊ້ຢາຂ້າແມງໄມ້ ແລະ ວັດສະພືດເປັນສາເຫດເຮັດໃຫ້ຈຸລິນຊີຢູ່ໃນດິນທີ່ເປັນປະໂຫຍດຫຼຸດລົງ<br>- ມີການຈູດເສດພືດ ແລະ ວັດສະພືດພາຍຫຼັງເກັບກ່ຽວເປັນສາເຫດເຮັດໃຫ້ອິນຊີວັດຖຸທີ່ຢູ່ໃນດິນຫຼຸດລົງ |
| - ການຂາດແຮງງານໃນການຜະລິດ | - ລະບົບການຜະລິດມີການນຳໃຊ້ແຮງງານຫຼາຍ |
| - ແມງໄມ້ ແລະ ພະຍາດພືດລະບາດ | - ສະພາບອາກາດແຫ້ງແລ້ງ ແລະ ໃຊ້ສານເຄມີບໍ່ຖືກວິທີເປັນສາເຫດເຮັດໃຫ້ແມງໄມ້ ແລະ ພະຍາດພືດລົງຢາ |
| - ຊາວກະສິກອນບໍ່ເຂົ້າໃຈເຕັກນິກ | - ນັກວິຊາການສົ່ງເສີມບໍ່ທົ່ວເຖິງ |
| - ສະພາບຂອງດິນຟ້າອາກາດປ່ຽນແປງ | - ເກີດຈາກສະພາບແວດລ້ອມທາງທຳມະຊາດ |

ຈາກຕາຕະລາງເຫັນວ່າ ແຕ່ລະສາເຫດຂອງບັນຫາທີ່ເຮັດໃຫ້ຜະລິດຕະພາບຂອງການປູກອ້ອຍ ແລະ ໝາກນອດພາຍໃຕ້ສັນຍາຫຼຸດລົງມີດັ່ງນີ້:

- ບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງມີສາເຫດມາຈາກ 4 ດ້ານຄື ການປູກພືດຊະນິດດຽວເປັນໄລຍະຍາວໃນພື້ນທີ່ເກົ່າເປັນຕົ້ນແມ່ນການປູກອ້ອຍ ແລະ ໝາກນອດປູກຄັ້ງໜຶ່ງສາມາດໃຫ້ຜົນຜະລິດໄດ້ 4-5 ລະດູການ (4-5 ປີ) ເຮັດໃຫ້ດິນບໍ່ມີການພັກຕົວເຮັດໃຫ້ທາດອາຫານໃນດິນຖືກນຳໃຊ້ບໍ່ສາມາດທົດແທນເອງໂດຍທຳມະຊາດ, ນຳໃຊ້ປຸ໋ຍເຄມີໃນການປັບປຸງດິນເປັນຕົ້ນແມ່ນການປູກອ້ອຍເມື່ອໃຊ້ໄປໄລຍະໃດໜຶ່ງເຫັນວ່າ ຕ້ອງໄດ້ເພີ່ມປະລິມານປຸ໋ຍເຄມີຂຶ້ນແຕ່ລະລະດູການຜະລິດ, ແຕ່ຜົນຜະລິດພັດຫຼຸດລົງເຮັດໃຫ້ບໍ່ມີຄວາມຍືນຍົງ, ການນຳໃຊ້ສານເຄມີໃນການກຳຈັດແມງໄມ້ ແລະ ພະຍາດພືດເປັນສາເຫດເຮັດໃຫ້ຈຸລິນຊີໃນດິນທີ່ຊ່ວຍຍ່ອຍສະ

ຫຼາຍເສດພືດເພື່ອກາຍເປັນອິນຊີວັດຖຸ ຫຼື ທາດອາຫານໃນດິນຫຼຸດລົງ ແລະ ການຈູດເສດພືດ ແລະ ວັດສະພືດພາຍຫຼັງຈາກທີ່ມີການເກັບກ່ຽວອ້ອຍເປັນສາເຫດເຮັດໃຫ້ອິນຊີວັດຖຸ ແລະ ຈຸລິນຊີໃນດິນຫຼຸດລົງ.

- ບັນຫາທາງດ້ານແຮງງານມີສາເຫດເນື່ອງມາຈາກເຕັກນິການປູກພືດ ແມ່ນໃຊ້ແຮງງານຫຼາຍ ແລະ ພື້ນທີ່ຂອງເຂດດັ່ງກ່າວເປັນພື້ນທີ່ຄ້ອຍຊັນບໍ່ສາມາດນຳໃຊ້ເຄື່ອງຈັກເຂົ້າໃນການຜະລິດໄດ້ໂດຍສະເພາະການປູກອ້ອຍ.

- ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດມີສາເຫດເນື່ອງມາຈາກສະພາບອາກາດແຫ້ງແລ້ງ ແລະ ການນຳໃຊ້ສານເຄມີບໍ່ຖືກວິທີ ຈຶ່ງເປັນເຫດເຮັດໃຫ້ແມງໄມ້ ແລະ ພະຍາດພືດລົງຢາ.

- ຊາວກະສິກອນບໍ່ເຂົ້າໃຈເຕັກນິກການຜະລິດ ມີສາເຫດມາເນື່ອງມາຈາກນັກວິຊາການສົ່ງເສີມບໍ່ທົ່ວເຖິງ ແລະ ຂາດວິຊາການເຮັດໃຫ້ຊາວກະສິກອນບໍ່ສາມາດປະຕິບັດຕາມເຕັກນິກໄດ້ເຊັ່ນວ່າ ເຕັກນິການໃສ່ປຸ໋ຍເຄມີຂອງອ້ອຍໃນຊ່ວງເລັ່ງການຈະເລີນເຕີບໂຕດັ່ງຮູບລຸ່ມນີ້:



**ຮູບ 12.** ການໃສ່ປຸ໋ຍເຄມີເພື່ອເລັ່ງການຈະເລີນເຕີບໂຕຂອງອ້ອຍທີ່ບໍ່ຖືກຕາມເຕັກນິກ

ບັນຫາທີ່ເຮັດໃຫ້ຜົນຜະລິດຕົກຕ່ຳຂອງການຜະລິດພາຍໃຕ້ສັນຍາພົບວ່າ ມີບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງ, ບັນຫາທາງດ້ານຂາດແຮງງານ, ບັນຫາແມງໄມ້ ແລະ ພະຍາດພືດລະບາດ ແລະ ບັນຫາຊາວກະສິກອນບໍ່ເຂົ້າໃຈເຕັກນິກການຜະລິດ ຊຶ່ງບັນຫາເຫຼົ່ານີ້ເປັນບັນຫາສຳຄັນຕໍ່ກັບການຜະລິພາຍໃຕ້ສັນຍາ ເນື່ອງຈາກວ່າການຜະລິດພາຍໃຕ້ສັນຍາຂອງບໍລິສັດແມ່ນໄດ້ເນັ້ນໃສ່ແຕ່ຜົນຜະລິດເປັນສຳຄັນ ໂດຍບໍ່ຄຳນຶ່ງເຖິງຜົນກະທົບຂອງບັນຫາຕາມມາຕໍ່ກັບລະບົບນິ

ເວດກະສິກຳ ແລະ ຄວາມຍືນຍົງຂອງການຜະລິດໂດຍສະເພາະການນຳໃຊ້ສານເຄມີບໍ່ຖືກວິທີ ເຮັດໃຫ້ມີຜົນກະທົບຕໍ່ກັບຊາວກະສິກອນໂດຍກົງ ແລະ ນິເວດກະສິກຳ (ຄວາມອຸດົມສົມບູນຂອງດິນ). ຊຶ່ງຄອນສະຫວັນ ແລະ ສຸກໄຊ (2011) ໄດ້ເວົ້າວ່າການຜະລິດພາຍໃຕ້ສັນຍາມີຄວາມສ່ຽງຕໍ່ກັບການລະບາດຂອງແມງໄມ້ ແລະ ພະຍາດພືດ, ສ່ຽງຕໍ່ກັບການເຊື່ອມຄຸນນະພາບຂອງດິນ ແລະ ມີຄວາມສ່ຽງຕໍ່ກັບການນຳໃຊ້ສານເຄມີທີ່ຊາວກະສິກອນບໍ່ເຂົ້າໃຈເຕັກນິກການນຳໃຊ້ເຮັດໃຫ້ສະພາບແວດລ້ອມເຊື່ອມໂຊມ ໂດຍສະເພາະແມ່ນດິນ, ນ້ຳ, ອາກາດ ເຫຼົ່ານີ້ເປັນຕົ້ນ.

ດັ່ງນັ້ນ, ການອະນຸຍາດຂອງບັນດາພາກສ່ວນທີ່ກ່ຽວຂ້ອງໃຫ້ບັນດາບໍລິສັດເຂົ້າມາລົງທຶນໃນການເຮັດສັນຍາການຜະລິດກັບຊາວກະສິກອນຄວນພິຈາລະນາຮູບແບບການຜະລິດ ທີ່ນຳມາສິ່ງເສີມໃຫ້ແກ່ຊາວກະສິກອນ ແລະ ເນື້ອໃນສັນຍາຂອງການຜະລິດຢ່າງຖີ່ຖ້ວນເພື່ອເຮັດໃຫ້ຜະລິດຕະພາບຂອງການຜະລິດພາຍໃຕ້ສັນຍາມີຄວາມຍືນຍົງ.

## 3. ວິທີແກ້ໄຂບັນຫາທີ່ເຮັດໃຫ້ຜົນຜະລິດຕະພາບຕົກຕ່ຳ

ວິທີແກ້ໄຂບັນຫາທີ່ເຮັດໃຫ້ຜະລິດຕະພາບຕົກຕ່ຳ ຂອງຊາວກະສິກອນ, ບໍລິສັດ ແລະ ກະສິກຳ ແລະ ປ່າໄມ້ເມືອງ ແມ່ນໄດ້ແກ້ໄຂດັ່ງນີ້:

### 3.1. ວິທີແກ້ໄຂບັນຫາຂອງຊາວກະສິກອນ

ໃນການແກ້ໄຂບັນຫາ ທີ່ເຮັດໃຫ້ຜະລິດຕະພາບຂອງການປູກພືດພາຍໃຕ້ສັນຍາຕົກຕ່ຳ ເຂົາເຈົ້າໄດ້ແກ້ໄຂບັນຫາດັ່ງນີ້:

- ບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງ ເຂົາເຈົ້າໄດ້ແກ້ໄຂດ້ວຍການເພີ່ມປະລິມານການໃສ່ປຸ໋ຍເຄມີ ເພື່ອຮັກສາສະມັດຕະພາບຂອງຜົນຜະລິດໃຫ້ເພີ່ມຂຶ້ນ ແລະ ອີກວິທີໜຶ່ງເຂົາເຈົ້າແກ້ໄຂດ້ວຍການພັກດິນ 3 ປີແລ້ວປູກໝູນວຽນພື້ນທີ່.
- ບັນຫາທາງດ້ານແຮງງານ ເຂົາເຈົ້າໄດ້ແກ້ໄຂດ້ວຍການຈ້າງແຮງງານເຂົ້າມາຊ່ວຍ ຫຼື ແລກປ່ຽນແຮງງານເຊິ່ງກັນ ແລະ ກັນ.
- ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດ ເຂົາເຈົ້າໄດ້ແກ້ໄຂດ້ວຍການນຳໃຊ້ສານເຄມີທີ່ເພີ່ມປະລິມານຄວາມເຂັ້ມຂຸ້ນຂຶ້ນ ຫຼື ນຳໃຊ້ຂ້າເປັນປະຈຳ ໃນການແກ້ໄຂບັນຫາດັ່ງກ່າວໂດຍການນຳໃຊ້ສານເຄມີເປັນຜົນກະທົບໂດຍກົງຕໍ່ກັບຜູ້ນຳໃຊ້ ແລະ ສະພາບແວດລ້ອມໂດຍສະເພາະນິເວດກະສິກຳ.
- ບັນຫາທາງດ້ານເຕັກນິກ ເຂົາເຈົ້າໄດ້ແກ້ໄຂດ້ວຍການຮຽນຮູ້ຈາກຊາວກະສິກອນດ້ວຍກັນ.

ຈາກສະພາບບັນຫາທີ່ຊາວກະສິກອນໄດ້ແກ້ໄຂ ເພື່ອຮັກສາຜະລິດຕະພາບຄວາມຍືນຍົງຂອງຜົນຜະລິດນັ້ນບາງບັນຫາກໍ່ບໍ່ໄດ້ຮັບການແກ້ໄຂເຊັ່ນ ບັນຫາທາງດ້ານສະພາບອາກາດແຫ້ງແລ້ງທີ່ໄດ້ເຮັດໃຫ້ຜົນຜະລິດຂອງອ້ອຍ ແລະ ໝາກນອດຫຼຸດລົງ ຊຶ່ງບັນຫານີ້ເກີດຈາກໄພທຳມະຊາດບໍ່ສາມາດແກ້ໄຂໄດ້. ບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງເຂົາເຈົ້າໄດ້ແກ້ໄຂດ້ວຍການເພີ່ມປະລິມານປຸ໋ຍເຄມີຂຶ້ນໃນແຕ່ລະປີ ຊຶ່ງວິທີແກ້ໄຂນີ້ເຮັດໃຫ້ຄວາມອຸດົມສົມບູນຂອງດິນບໍ່ມີຄວາມຍືນຍົງ, ແຕ່ເມື່ອປຽບທຽບກັບການປູກອ້ອຍຢູ່ບ້ານຜາປູນເກົ່າແລ້ວເຂົາເຈົ້າໄດ້ແກ້ໄຂບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງໂດຍການໝູນວຽນພື້ນທີ່ການຜະລິດ ຊຶ່ງພັກດິນໄວ້ 3 ປີແລ້ວກັບຄືນມາປູກໃນພື້ນທີ່ເກົ່າ.

### 3.2. ວິທີແກ້ໄຂບັນຫາຂອງບໍລິສັດ

ໃນການແກ້ໄຂບັນຫາ ທີ່ເຮັດໃຫ້ຜະລິດຕະພາບຂອງການປູກພືດພາຍໃຕ້ສັນຍາຕົກຕ່ຳເຂົາເຈົ້າໄດ້ແກ້ໄຂບັນຫາດັ່ງນີ້:

- ບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງ ແກ້ໄຂດ້ວຍການສະໜອງປຸ໋ຍເຄມີໃຫ້ແກ່ຊາວກະສິກອນເພີ່ມຂຶ້ນຕາມແຕ່ລະດູການ. ຊຶ່ງເຂົາເຈົ້າແມ່ນໄດ້ເນັ້ນໃສ່ແຕ່ການນຳໃຊ້ປຸ໋ຍເຄມີເພື່ອຍົກສະມັດຕະພາບຜົນຜະລິດເທົ່ານັ້ນ ໂດຍບໍ່ໄດ້ຄຳນຶ່ງເຖິງບັນຫາຕາມມາຄື ຄວາມອຸດົມສົມບູນຂອງດິນຫຼຸດລົງ ສະນັ້ນ, ບັນຫາຄວາມອຸດົມສົມບູນຂອງດິນຈຶ່ງເປັນສິ່ງທ້າທາຍຕໍ່ກັບການຜະລິດຂອງຊາວກະສິກອນໃນອານາຄົດ.

- ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດ ໄດ້ສະໜອງຢາປາບແມງໄມ້ ແລະ ພະຍາດພືດໃຫ້ແກ່ຊາວກະສິກອນ ໂດຍບໍ່ໄດ້ຄຳນຶງເຖິງຜູ້ນຳໃຊ້ ແລະ ນິເວດກະສິກຳຈຶ່ງມີຜົນກະທົບໂດຍກົງຕໍ່ກັບຊາວກະສິກອນທີ່ນຳໃຊ້. ໃນການນຳໃຊ້ສານເຄມີດັ່ງກ່າວບໍລິສັດພຽງແຕ່ສະໜອງສານເຄມີທີ່ນຳໃຊ້, ແຕ່ທາງດ້ານເຕັກນິກການນຳໃຊ້ນັ້ນຍັງບໍ່ສາມາດສະໜອງໃຫ້ຊາວກະສິກອນເຂົ້າໃຈດີເທົ່າທີ່ຄວນ ແລະ ອຸປະກອນຍັງເປັນແບບປະຖົມປະຖານ ໂດຍສະເພາະອຸປະກອນການປ້ອງກັນຜູ້ນຳໃຊ້ສານເຄມີຍັງບໍ່ສາມາດປ້ອງກັນໄດ້.

- ບັນຫາທາງດ້ານເຕັກນິກ ເຂົາເຈົ້າແກ້ໄຂດ້ວຍການສະໜອງວິຊາການເພີ່ມຂຶ້ນໃຫ້ທົ່ວເຖິງເພື່ອໃຫ້ຊາວກະສິກອນສາມາດນຳໃຊ້ເຕັກນິກ ແລະ ນຳໃຊ້ສານເຄມີຢ່າງຖືກວິທີ.

ຈາກສະພາບບັນຫາທີ່ບໍລິສັດໄດ້ແກ້ໄຂ ເພື່ອຮັກສາສະມັດຕະພາບຄວາມຍືນຍົງຂອງຜົນຜະລິດນັ້ນມີບາງບັນຫາທີ່ບໍລິສັດກໍ່ບໍ່ສາມາດແກ້ໄຂໄດ້ຄື ໄພທຳມະຊາດທາງດ້ານສະພາບອາກາດ ແລະ ບາງບັນຫາບໍລິສັດກໍ່ບໍ່ໄດ້ເອົາໃຈໃສ່ແກ້ໄຂເລີຍເຊັ່ນ ບັນຫາທາງດ້ານແຮງງານທີ່ຊາວກະສິກອນໄດ້ພົບພໍ້ໂດຍສະເພາະໃນຊ່ວງລະດູການເກັບກ່ຽວອ້ອຍ ຊຶ່ງບໍລິສັດບໍ່ພຽງແຕ່ບໍ່ແກ້

ໄຂເທົ່ານັ້ນ ເຂົາເຈົ້າຍັງໄດ້ເຮັດສັນຍາບັງຄັບໃຫ້ຊາວກະສິກອນຕ້ອງກັບກຸ່ງວໃຫ້ທັນກັບເວລາອີກດ້ວຍ.

### 3.3. ວິທີແກ້ໄຂບັນຫາຂອງພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

ໃນການແກ້ໄຂບັນຫາ ທີ່ເຮັດໃຫ້ຜະລິດຕະພາບຂອງການປູກພືດພາຍໃຕ້ສັນຍາຕົກຕ່ຳ ເຂົາເຈົ້າໄດ້ໃຫ້ຄຳປຶກສາແກ່ບໍລິສັດ ແລະ ຊາວກະສິກອນ ເມື່ອມີບັນຫາຕ່າງໆເກີດຂຶ້ນ ກະສິກຳ ແລະ ປ່າໄມ້ເມືອງ ກໍ່ລົງຕິດຕາມ ແລະ ຊ່ວຍແກ້ໄຂບັນຫາເຊັ່ນ

- ບັນຫາທາງດ້ານຄວາມອຸດົມສົມບູນຂອງດິນຫຼຸດລົງ ເຂົາເຈົ້າໄດ້ເຮັດປຸ໋ຍໝັກໂດຍນຳໃຊ້ສິ່ງເສດເຫຼືອຈາກການຜະລິດອ້ອຍເພື່ອນຳມາປັບປຸງດິນໃນການຜະລິດ ຊຶ່ງKevin Kamp (2010) ໄດ້ເວົ້າວ່າການນຳໃຊ້ປຸ໋ຍໝັກຈາກເສດພືດເຂົ້າໃນການປັບປຸງດິນຊ່ວຍເຮັດໃຫ້ດິນມີຄວາມອຸດົມສົມບູນຂອງດິນເພີ່ມຂຶ້ນທາງດ້ານອິນຊີວັດຖຸ, ທາດອາຫານພືດ ແລະ ຈຸລິນຊີທີ່ມີຊີວິດ ການນຳໃຊ້ປຸ໋ຍໝັກເຂົ້າໃນການຜະລິດດັ່ງກ່າວນີ້ເຮັດໃຫ້ຜະລິດຕະພາບມີຄວາມຍືນຍົງ. ການປ່ຽນແປງຮູບແບບການຜະລິດຂອງຊາວກະສິກອນຂອງການປູກພືດຕິດຕໍ່ກັນເປັນໄລຍະຍາວ ຫັນມາປູກແບບໝູນຫວຽນພື້ນທີ່ໂດຍພັກດິນໄວ້ໃນໄລຍະ 2 ປີ ແລ້ວຈຶ່ງກັບຄືນມາປູກໃນພື້ນທີ່ເກົ່າ ແລະ ກຳນົດໄລຍະເວລາຂອງການປູກພືດບໍ່ເກີນ 3 ປີ.

- ບັນຫາທາງດ້ານຊາວກະສິກອນບໍ່ເຂົ້າໃຈເຕັກນິກການຜະລິດ ເຂົາເຈົ້າກໍ່ໄດ້ສະໜອງເຕັກນິກ ແລະ ວິຊາການໃຫ້ແກ່ບໍລິສັດເພື່ອລົງໄປສົ່ງເສີມໃຫ້ແກ່ຊາວກະສິກອນ ແລະ ການຈັດໃຫ້ຊາວກະສິກອນຖອດຖອນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໂດຍເອົາຊາວກະສິກອນສອນຊາວກະສິກອນເອົາຄອບຄົວທີ່ເປັນຕົວແບບແລກປ່ຽນບົດກັບຄອບຄົວອື່ນໆ ຊຶ່ງເປັນການສ້າງໃຫ້ເຂົາເຈົ້າມີການພັດທະນາທາງດ້ານເຕັກນິກການຜະລິດ ແລະ ສ້າງໃຫ້ເຂົາເຈົ້າມີປະສົບການໄດ້ຫຼາຍຂຶ້ນ.

ຫ້ອງການກຳສິກຳ ແລະ ປ່າໄມ້ເມືອງ ຍັງໄດ້ພິຈາລາບັນດາບໍລິສັດອີກຖ້າຫາກເອົາປຽບຊາວກະສິກອນ ແລະ ບໍ່ສາມາດປະຕິບັດຕາມສັນຍາ (ສົ່ງເສີມການຜະລິດເປັນສິນຄ້າມີກຳໄລ) ໄດ້ກະສິກຳ ແລະ ປ່າໄມ້ເມືອງ ກໍ່ເຮັດການຍົກເລີກສັນຍາ ເພື່ອປົກປ້ອງຜົນປະໂຫຍດຂອງຊາວກະສິກອນ.

## ສະຫຼຸບ

ຜ່ານການສຶກສາ ເງື່ອນໄຂການຮັບປະກັນຄວາມຍືນຍົງທາງດ້ານຜະລິດຕະພາບຂອງການຜະລິດພາຍໃຕ້ສັນຍາຢູ່ເມືອງບຸນເໜືອ ແຂວງຜົ້ງສາລີ ຊຶ່ງມີຈຸດປະສົງສຶກສາຄື ສຶກສາສະພາບບັນຫາຂອງການຜະລິດພາຍໃຕ້ສັນຍາທີ່ເຮັດໃຫ້ຜະລິດຕະພາບຕົກຕໍ່າ ແລະ ສຶກສາແນວທາງໃນການຮັກສາຜະລິດຕະພາບຂອງການຜະລິດກະສິກໍາພາຍໃຕ້ສັນຍາ ຈາກຜົນໄດ້ຮັບສາມາດສະຫຼຸບໄດ້ດັ່ງນີ້:

ສະພາບການຜະລິດພາຍໃຕ້ສັນຍາຂອງຊາວກະສິກອນເມືອງບຸນເໜືອ ແຂວງຜົ້ງສາລີ ໄດ້ພົບກັບບັນຫາຜະລິດຕະພາບຂອງການຜະລິດຕົກຕໍ່າ ໂດຍສະເພາະການປູກໝາກນອດ ແລະ ການປູກອ້ອຍໄດ້ຫຼຸດລົງ. ສະມັດຕະພາບຂອງການຜະລິດພືດພາຍໃຕ້ສັນຍາຫຼຸດລົງດັ່ງກ່າວນັ້ນ, ເນື່ອງຈາກບັນຫາຂອງການຜະລິດພາຍໃຕ້ສັນຍາ ຊຶ່ງບັນຫາທີ່ສໍາຄັນ ແມ່ນເກີດຈາກຄວາມອຸດົມສົມບູນຂອງດິນຫຼຸດລົງຮອງລົງມາແມ່ນບັນຫາທາງດ້ານການຂາດແຮງງານໃນການຜະລິດ, ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດລະບາດ, ຊາວກະສິກອນບໍ່ເຂົ້າໃຈເຕັກນິກການຜະລິດ ແລະ ບັນຫາສະພາບດິນຟ້າອາກາດມີການປ່ຽນແປງ.

ຈາກສະພາບບັນຫາດັ່ງກ່າວ ທີ່ເຮັດໃຫ້ຜະລິດຕະພາບຂອງການຜະລິດຕົກຕໍ່າຂອງຊາວກະສິກອນ, ບັນດາທັງ 3 ພາກສ່ວນທີ່ກ່ຽວຂ້ອງຄື ຊາວກະສິກອນ, ບໍລິສັດ ແລະ ພະນັກງານຫ້ອງການກະສິກໍາ ແລະ ປ່າໄມ້ ເຂົາເຈົ້າໄດ້ເວົ້າວ່າ ບັນຫາຄວາມອຸດົມສົມບູນຂອງດິນຫຼຸດລົງເຂົາເຈົ້າໄດ້ແກ້ໄຂດ້ວຍການເພີ່ມປະລິມານການໃສ່ປຸ໋ຍເຄມີຂຶ້ນແຕ່ລະລະດູການ ແລະ ພັກດິນ 2-3 ປີແລ້ວປູກໝູນວຽນພື້ນທີ່, ບັນຫາທາງດ້ານຂາດແຮງງານແກ້ໄຂດ້ວຍການຈ້າງແຮງງານເຂົ້າມາຊ່ວຍ ຫຼື ແລກປ່ຽນແຮງງານເຊິ່ງກັນ ແລະ ກັນ, ບັນຫາທາງດ້ານແມງໄມ້ ແລະ ພະຍາດພືດແກ້ໄຂດ້ວຍການນໍາໃຊ້ສານເຄມີທີ່ເພີ່ມປະລິມານຄວາມເຂັ້ມຂຸ້ນຂຶ້ນ ຫຼື ນໍາໃຊ້ຂ້າເປັນປະຈໍາ ແລະ ບັນຫາທາງດ້ານເຕັກນິກ ເຂົາເຈົ້າແກ້ໄຂດ້ວຍການຈັດໃຫ້ຊາວກະສິກອນຖອດຖອນແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໂດຍເອົາຊາວກະສິກອນສອນຊາວກະສິກອນເອົາຄອບຄົວທີ່ເປັນຕົວແບບແລກປ່ຽນບົດຮຽນກັບຄອບຄົວອື່ນໆ ແລະ ສະໜອງວິຊາການເພື່ອລົງໄປສົ່ງເສີມໃຫ້ແກ່ຊາວກະສິກອນ. ສ່ວນບັນຫາທາງດ້ານສະພາບດິນຟ້າອາກາດປ່ຽນແປງບໍ່ໄດ້ຮັບການແກ້ໄຂຍ້ອນເກີດຈາກສະພາບແວດລ້ອມທາງທໍາມະຊາດ.

# ຂໍ້ສະເໜີ

1. ທຸກພາກສ່ວນ ຫຼື ທຸກຂະແໜງການທີ່ກ່ຽວຂ້ອງຂອງອຳນາດການປົກຄອງແມ່ນຕ້ອງໄດ້ມີການປັບປຸງຄວາມເປັນເຈົ້າການຕາມສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນໂດຍການຈັດສົ່ງພະນັກງານທີ່ມີປະສົບການລົງປະຈຳຢູ່ພື້ນທີ່ ແລະ ຖ້າມີບັນຫາເກີດຂຶ້ນຄວນມີການລາຍງານໃຫ້ຂັ້ນເທິງເພື່ອແກ້ໄຂບັນຫາທວງທັນກັບສະພາບການ.

2. ບໍລິສັດ ຫຼື ອຳນາດການປົກຄອງຄວນລົງເຜີຍແຜ່ການນຳໃຊ້ສານເຄມີໃຫ້ແກ່ປະຊາຊົນເພື່ອໃຫ້ປະຊາຊົນຮູ້ເຖິງວິທີການນຳໃຊ້ສານເຄມີໃຫ້ຖືກຕ້ອງ.

3. ບໍລິສັດ ຫຼື ອຳນາດການປົກຄອງຄວນປັບປຸງເຕັກນິກການຜະລິດເຊັ່ນ: ຫຼຸດຜ່ອນການນຳໃຊ້ສານເຄມີ, ສົ່ງເສີມການປູກພືດທີ່ໃຊ້ສານເຄມີໜ້ອຍ ໂດຍການໃຊ້ຝຸ່ນຊີວະພາບຫຼາຍຂຶ້ນ

4. ບໍລິສັດ ແລະ ທຸກຂະແໜງການທີ່ກ່ຽວຂ້ອງຄວນມີມາດຕະການຄວາມໂປ່ງໃສ່ດ້ານນ້ຳໜັກ (ອ້ອຍ) ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຄູ່ສັນຍາລະຫວ່າງຊາວກະສິກອນ ແລະ ບໍລິສັດ.

5. ຊາວກະສິກອນຄວນເອົາໃຈໃສ່ໃນການປ້ອງກັນຈາກການນຳໃຊ້ສານເຄມີເພື່ອຄວາມປອດໄພຂອງຕົນເອງ.

6. ໃນການເຮັດສັນຍາ ຄວນລະບຸເນື້ອໃນສັນຍາຢ່າງຊັດເຈນເພື່ອເປັນບ່ອນອ້າງອີງໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ.

# ເອກະສານອ້າງອີງ

- ຄອນສະຫວັນ ວັນວິໄລ ແລະ ສຸກໄຊ ຈັນທະສິມບັດ, 2011.ບົດລາຍງານທ້າຍການສຶກສາເລື່ອງ: ສຶກສາຮູບແບບຂອງການຜະລິດພາຍໃຕ້ສັນຍາຂອງຊາວກະສິກອນຢູ່ ເມືອງບຸນເໜືອ ແຂວງຜົ້ງສາລີ ສປປ ລາວ.

- ມະໂນລິນ ເທບຄຳວົງ, 2011. ຮ່າງ1 ສັນຍາກ່ຽວກັບການຜະລິດແບບມີຂໍ້ຜູກພັນໃນສັນຍາ.

- ພຸດສີ ບຸນມີຈິດ, 2010. ບົດລາຍງານທ້າຍການສຶກສາເລື່ອງ: ສຶກສາຈຸດດີ-ຈຸດອ່ອນຂອງການເຮັດສັນຍາຊື້-ຂາຍຜົນຜະລິດກະສິກຳລະຫວ່າງຊາວກະສິກອນ ແລະ ຜູ້ເກັບຊື້ຢູ່ເມືອງຊຽງເງິນ ແຂວງຫຼວງພະບາງ ສປປ ລາວ.

- ຂັນແກ້ວ ອຸປຣະວັນ ແລະ ຄຳສອນ ຫຼັກໄມຕຣີ, 2008 ການຂະຫຍາຍຕົວຢ່າງໄວວາຂອງການປູກຢາງພາລາຢູ່ແຂວງຫຼວງນ້ຳທາ ແລະ ການເບິ່ງບັນຫາດ້ວຍທັດສະນະລະ ຫວ່າງປະເທດ. ໂຄງການສົ່ງເສີມກະສິກຳ. ສປປ ລາວ ປາລິກອນທະລົງແສງຈັນ, 2008.

- Fullbrook, D. 2007. Contract Farming in Lao PDR: Case and Questions. Lao Extension Agriculture Project, Vientiane, Lao PDR. 48pp.

- www.lao44.org: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ. ສະບັບ 02/ສພຊ ລົງວັນທີ 8 ກໍລະກົດ 2009

- www.lao44.org: ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ. ສະບັບ 02/90/ສປຊ ລົງວັນທີ່ 27 ມີຖຸນາ 1990. ເວລາ 10 ໂມງ 15 ນາທີ, ວັນທີ 12/ 6/ 2011.

- Kevin Kamp, 2010. ການກະສິກຳແບບຍືນຍົງ ຢູ່ ສປປ ລາວ.

# ເອກະສານຊ້ອນທ້າຍ

## 1. ຮູບຊ້ອນທ້າຍ

**ຮູບຊ້ອນທ້າຍ 1.** ເຕັກນິການນຳໃຊ້ສານເຄມີກຳຈັດແມງໄມ້, ພະຍາດພືດ ແລະ ວັດສະພືດໃນອ້ອຍທີ່ເປັນພາສາຈີນ




**ຮູບຊ້ອນທ້າຍ 2.** ສານເຄມີ ແລະ ປຸ໋ຍເຄມີເປັນພາສາຈີນທີ່ນຳໃຊ້ເຂົ້າໃນການຜະລິດ





**ຮູບຊ້ອນທ້າຍ 3.** ພື້ນທີ່ການບຸກເບີກເພື່ອປູກອ້ອຍ




**ຮູບຊ້ອນທ້າຍ 4.** ການເກັບຊື້ອ້ອຍເພື່ອຂົນສົ່ງປ້ອນໃຫ້ກັບໂຮງງານເມືອງຫຼ້າປະເທດຈີນ




**ຮູບຊ້ອນທ້າຍ 5.** ເຄືອໝາກນອດທີ່ນຳມາຕັດເປັນຕ່ອນນ້ອຍໆແລ້ວຕາກແຫ້ງເພື່ອຈຳໜ່າຍ



**ຮູບຊ້ອນທ້າຍ 6.** ຜົນຜະລິດມັນຝຣັ່ງທີ່ຊາວກະສິກອນເກັບກູ້



**ຮູບຊ້ອນທ້າຍ 7.** ຜະລິດຕະພັນຊາທີ່ອັດແຫ້ງເປັນກ້ອນ

